# ພຣະທັມດານີເອນ


| | | | | | |
|---|---|---|---|---|---|
| 1 | 2 | 3 | 4 | 5 | 6 |
| 7 | 8 | 9 | 10 | 11 | 12 |


## ດານີເອນ

## DANIEL

### 1 ເຍົາວະຊົນອິສຣາເອນທີ່ຣາຊສຳນັກເນບູກາດເນສຊາ

Four Young Israelites at the Babylonian Court

(2 ກສດ 24:10-17)

1 ໃນປີທີສາມແຫ່ງຣາຊການເຢຮີວອາກິມ ກະສັດຣາຊອານາຈັກຢູດາ ເນບູກາດເນສຊາກະສັດຣາຊອານາຈັກ
ບາບີໂລນ ໄດ້ເຂົ້າໂຈມຕີກຸງເຢຣູຊາ ເລັມແລະໄດ້ລ້ອມເມືອງໄວ້
2 ພຣະຜູ້ເປັນເຈົ້າໄດ້ຊົງໃຫ້ເນບູກາດເນສຊາ ຈັບເອົາກະສັດເຢຮີວອາກິມ ແລະຍຶດເອົາສິ່ງຂອງບາງຢ່າງຈາກຄັງ
ພຣະວິຫານ ແລ້ວເນບູກາດເນສຊາໄດ້ເອົາພວກຊະເລີຍໄປຍັງບາບີໂລນ ແລະເອົາສິ່ງຂອງທີ່ຍຶດໄດ້ນັ້ນໄປ
ເກັບມ້ຽນໄວ້ໃນພຣະຄັງ
3 ພຣະອົງໄດ້ຊົງສັ່ງໃຫ້ຫົວຫນ້າຂັນທີເລືອກເອົາພວກຊະເລີຍອິສຣາເອນທີ່ເປັນຄົນຫນຸ່ມບາງຄົນຊຶ່ງເປັນເຊື້ອ
ສາຍພຣະວົງແລະເຊື້ອສາຍເຈົ້ານາຍ
4 ຄົນເຫລົ່ານີ້ຈະຕ້ອງເປັນຜູ້ສະງ່າງາມ ມີສຸຂະພາບສົມບູນ ມີຄວາມສລາດ ໄດ້ຮັບການຝຶກຫັດເປັນຢ່າງດີ ແລະ
ມີປັນຍາສ້ຽມແຫລມ ເພື່ອວ່າພວກເຂົາຈະໄດ້ມີຄຸນສົມບັດເຂົ້າຮັບໃຊ້ໃນພຣະຣາຊສຳນັກ ອັສເປນັສຈະເປັນຜູ້
ສອນໃຫ້ພວກເຂົາອ່ານ ແລະຂຽນພາສາບາບີໂລນໄດ້
5 ພຣະຣາຊາຊົງສັ່ງໃຫ້ນຳອາຫານແລະເຫລົ້າອະງຸ່ນ ທີ່ພຣະອົງຊົງສເວີຍມາໃຫ້ພວກເຂົາກິນດື່ມທຸກມື້ ໃຫ້ລ້ຽງດູ
ເຂົາຢູ່ເປັນເວລາສາມປີ ແລ້ວພວກເຂົາຈຶ່ງຈະຖືກນຳເຂົ້າເຝົ້າພຣະຣາຊາ
6 ໃນບັນດາຄົນທີ່ຖືກຄັດເລືອກເຫລົ່ານີ້ມີຊາວຢູດາດ້ວຍ ຄືດານີເອນ ຮານານີຢາ ມີຊາເອນ ແລະອາຊາຣີຢາ
7 ຫົວຫນ້າພະນັກງານໄດ້ເອີ້ນຊື່ພວກເຂົາໃຫມ່ດັ່ງນີ້ ດານີເອນເອີ້ນວ່າ ເບນເຕຊັສຊາ ຮານານີຢາເອີ້ນວ່າ ຊັດຣັຄ
ມີຊາເອນເອີ້ນວ່າ ເມຊາກ ແລະອາຊາຣີຢາເອີ້ນວ່າ ອາເບດເນໂກ
8 ດານີເອນໄດ້ຕັດສິນໃນວ່າ ຈະບໍ່ເຮັດຜິດພຣະເຈົ້າຍ້ອນອາຫານແລະນ້ຳອະງຸ່ນຂອງພຣະຣາຊາ ເຂົາໄດ້ຂໍຮ້ອງ
ຫົວຫນ້າຂັນທີໃຫ້ຊ່ວຍເຫລືອເຂົາ
9 ພຣະເຈົ້າຈຶ່ງຊົງເຮັດໃຫ້ຫົວຫນ້າຂັນທີມີເມດຕາຈິດແລະສົງສານດານີເອນ
10 ແຕ່ຫົວຫນ້າຂັນທີບອກດານີເອນວ່າ, “ຂ້າພະເຈົ້າຢ້ານພຣະຣາຊາ ພຣະອົງຊົງສັ່ງໃຫ້ເຈົ້າກິນແລະດື່ມຂອງ
ເຫລົ່ານີ້ ຖ້າເຈົ້າບໍ່ຕຸ້ຍພີເຫມືອນຄົນຫນຸ່ມອື່ນໆ ພຣະອົງອາດຈະຊົງສັ່ງປະຫານຊີວິດຂ້າພະເຈົ້າກໍໄດ້”
11 ດັ່ງນັ້ນ ດານີເອນຈຶ່ງໄປຫາຄົນຍາມທີ່ຫົວຫນ້າຂັນທີແຕ່ງໃຫ້ດູແລດານີເອນ ຮານານີຢາ ມີຊາເອນ ແລະອາຊາ
ຣີຢາ
12 ວ່າ, “ຂໍທ່ານຈົ່ງທົດລອງຜູ້ຮັບໃຊ້ຂອງທ່ານຈັກສິບມື້ ຂໍໃຫ້ເຂົານຳຜັກມາໃຫ້ເຮົາກິນ ແລະນ້ຳມາໃຫ້ເຮົາດື່ມ
13 ແລ້ວໃຫ້ທ່ານສັງເກດເບິ່ງພວກເຮົາກັບຄົນຫນຸ່ມທີ່ກິນອາຫານຂອງພຣະຣາຊາ ແລ້ວທ່ານຈຶ່ງຕັດສິນໃຈຕາມທີ່
ເຫັນສົມຄວນ”
14 ຄົນຍາມໄດ້ຕົກລົງໃຫ້ພວກເຂົາທົດລອງເບິ່ງສິບມື້ ເມື່ອຫມົດກຳນົດສິບມື້ແລ້ວ

15 ກໍເຫັນວ່າພວກເຂົາມີສຸຂະພາບແຂງແຮງກວ່າພວກທີ່ກິນອາຫານຂອງພຣະຣາຊາ
16 ດັ່ງນັ້ນ ຄົນຍາມຈຶ່ງບໍ່ເອົາອາຫານແລະນໍ້າອະງຸ່ນຂອງພຣະຣາຊາໃຫ້ພວກເຂົາກິນ ໃຫ້ກິນແຕ່ຜັກກັບນໍ້າລ້າໆ ຕາມທີ່ເຂົາ ສເນີມາ
17 ພຣະເຈົ້າໄດ້ຊົງປະທານໃຫ້ພວກຄົນໜຸ່ມສີ່ຄົນນີ້ມີຄວາມຮູ້ ມີຄວາມຊໍານິຊໍານານອັນນະຄະດີ ແລະປັນຍາ ເປັນຢ່າງດີ ພຣະອົງຊົງໂຜດໃຫ້ດານີເອນຊໍານານການແປນິມິດແລະແກ້ຄວາມຝັນ
18 ເມື່ອຖ້ວນກໍານົດສາມປີທີ່ພຣະຣາຊາຊົງກໍານົດໄວ້ ຫົວໜ້າຂັນທີກໍນໍາຄົນໜຸ່ມທັງໝົດເຂົ້າເຝົ້າກະສັດເນບຸກາດເນສຊາ
19 ພຣະອົງຊົງສົນທະນາກັບພວກເຂົາ ກໍຊົງເຫັນວ່າດານີເອນ ຮານານີຢາ ມີຊາເອນ ແລະອາຊາຣີຢາສລາດກວ່າຄົນອື່ນໆ ດັ່ງນັ້ນ ພວກເຂົາຈຶ່ງໄດ້ເຂົ້າຮັບຣາຊການໃນພຣະຣາຊສໍານັກ
20 ບັນຫາຫລືຄໍາຖາມທີ່ພຣະຣາຊາຊົງຍົກຂຶ້ນມານັ້ນ ພວກເຂົາຮູ້ໝົດ ພຣະອົງຈຶ່ງຊົງເຫັນວ່າທັງສີ່ຄົນນີ້ຕອບໄດ້ດີກວ່າພວກໝໍດູ ຫລືໝໍມົນໃນຣາຊອານາຈັກຂອງພຣະອົງເຖິງສິບເທົ່າ
21 ດານີເອນໄດ້ຮັບຣາຊການເລື້ອຍມາຈົນເຖິງສມັຍໄຊຣັສເປັນກະສັດຣາຊອານາຈັກບາບີໂລນ

## 2 ພຣະສຸບິນຂອງກະສັດເນບຸກາດເນສຊາ

Nebuchadnezzar’s Dream

1 ເມື່ອເນບຸກາດເນສຊາຊົງເປັນກະສັດໄດ້ສອງປີ ກໍຊົງຝັນເປັນທຸກໃນພຣະທັຍຈົນບັນທົມບໍ່ຫລັບ
2 ດັ່ງນັ້ນ ພຣະອົງຈຶ່ງຊົງຮັບສັ່ງໃຫ້ພວກໝໍດູ ໝໍມົນ ໝໍຜີ ແລະໝໍວິຊາອາຄົມມາທູນຄວາມຝັນນັ້ນແກ່ພຣະອົງ ເມື່ອພວກເຂົາໄດ້ເຂົ້າມາເຝົ້າພຣະຣາຊາແລ້ວ
3 ພຣະອົງຊົງກ່າວຕໍ່ພວກເຂົາວ່າ, “ເຮົາໄດ້ຝັນບໍ່ດີເປັນທຸກໃຈຫລາຍ ເຮົາຢາກຮູ້ວ່າຄວາມຝັນນັ້ນເປັນຢ່າງໃດ”
4 ພວກເຂົາໄດ້ກາບທູນພຣະຣາຊາເປັນພາສາອາຣາມວ່າ, “ຂໍພຣະອົງຊົງພຣະຈະເຣີນເທີນ ຂໍຊົງເລົ່າຄວາມຝັນຂອງພຣະອົງໃຫ້ພວກຂ້າພຣະອົງຟັງ ເພື່ອພວກຂ້າພຣະອົງຈະໄດ້ທູນຖວາຍຄວາມແກ້ແດ່ພຣະອົງ”
5 ພຣະຣາຊາຊົງກ່າວຕໍ່ພວກໝໍວິຊາອາຄົມວ່າ, “ເຮົາໄດ້ຕັດສິນໃຈແລ້ວວ່າ ຖ້າພວກເຈົ້າບອກຄວາມຝັນ ແລະແກ້ຄວາມຝັນໃຫ້ເຮົາບໍ່ໄດ້ ເຮົາຈະຂ້າພວກເຈົ້າຢ່າງທາຣຸນ ແລະທໍາລາຍບ້ານເຮືອນຂອງພວກເຈົ້າຖິ້ມ
6 ແຕ່ຖ້າພວກເຈົ້າບອກແລະແກ້ຄວາມຝັນໃຫ້ເຮົາໄດ້ ເຮົາຈະໃຫ້ລາງວັນແລະກຽດຕິຍົດອັນຍິ່ງໃຫຍ່ແກ່ພວກເຈົ້າ ດັ່ງນັ້ນ ຈົ່ງບອກຄວາມຝັນແລະແກ້ຄວາມຝັນໃຫ້ເຮົາເສັຽ”
7 ພວກເຂົາໄດ້ທູນພຣະຣາຊາອີກວ່າ, “ຖ້າພຣະອົງຊົງເລົ່າຄວາມຝັນໃຫ້ຂ້າພຣະອົງຮູ້ ພວກຂ້າພຣະອົງຈຶ່ງຈະແກ້ຄວາມຝັນນັ້ນໄດ້”
8 ແລ້ວພຣະຣາຊາຊົງກ່າວວ່າ, “ເຮົາຄິດແລ້ວວ່າພວກເຈົ້າພຍາຍາມຖ່ວງດຶງເວລາໄວ້ ເພາະພວກເຈົ້າຮູ້ວ່າເຮົາເປັນຄົນຕັດສິນໃຈເດັດຂາດ
9 ຖ້າພວກເຈົ້າບໍ່ບອກຄວາມຝັນໃຫ້ເຮົາຮູ້ ພວກເຈົ້າກໍຈະໄດ້ຮັບໂທດຢ່າງດຽວກັນ ພວກເຈົ້າຕົກລົງກັນຕົວະຈົນເທົ່າເຮົາຈະປ່ຽນໃຈ ແຕ່ເຮົາຊິບໍ່ປ່ຽນ ຈົ່ງບອກຄວາມຝັນແກ່ເຮົາເສັຽ ເຮົາຈຶ່ງຈະຮູ້ວ່າພວກເຈົ້າແກ້ຄວາມຝັນນັ້ນໄດ້”
10 ພວກໝໍວິຊາອາຄົມໄດ້ທູນພຣະຣາຊາວ່າ, “ບໍ່ມີຄົນໃດດອກໃນພື້ນພິພົບນີ້ທີ່ສາມາດບອກສິ່ງທີ່ພຣະອົງຢາກຮູ້ໄດ້ ບໍ່ມີພຣະຣາຊາອົງຍິ່ງໃຫຍ່ແລະຊົງຣິດອົງໃດໄຕ່ຖາມເຊັ່ນນີ້ກັບພວກໝໍດູ ໝໍມົນແລະໝໍວິຊາອາຄົມ
11 ສິ່ງທີ່ພຣະຣາຊາຖາມມານັ້ນຍາກຫລາຍ ບໍ່ມີໃຜຈະຖວາຍຄໍາຕອບແກ່ພຣະອົງໄດ້ ນອກຈາກພວກພຣະຊຶ່ງບໍ່ໄດ້ເປັນມະນຸດ”

12 ຍ້ອນການເວົ້າຢ່າງນີ້ພຣະຣາຊາຈຶ່ງຊົງພິໂຣດ ແລະຊົງຮັບສັ່ງໃຫ້ປະຫານຊີວິດພວກຫມໍຕ່າງໆຊຶ່ງເປັນທີ່ປຶກສາ
ມະຫາກະສັດໃນກຸງບາບີໂລນ
13 ດັ່ງນັ້ນ ຈຶ່ງມີພຣະຣາຊອົງການປະກາດອອກໄປວ່າ ໃຫ້ຂ້າພວກຣາຊບັນດິດທັງຫມົດ ເຂົາຈຶ່ງຊອກຫາດານີເອນ
ແລະເພື່ອນຝູງຂອງເຂົາເພື່ອຈະຂ້າເສັຽ
14 ຕໍ່ມາ ດານີເອນໄດ້ບອກຢ່າງມີພິກໄຫວແກ່ອາຣີໂອກ ຜູ້ບັນຊາການທະຫານປະຈຳພຣະຣາຊວັງ ຜູ້ຊຶ່ງໄດ້ຮັບ
ຄຳສັ່ງໃຫ້ອອກໄປຂ້າທີ່ປຶກສາທັງຫລາຍ
15 ທ່ານຖາມອາຣີໂອກວ່າ, "ເປັນຫຍັງພຣະຣາຊາຈຶ່ງອອກຄຳສັ່ງຮຸນແຮງເຊັ່ນນີ້?" ອາຣີໂອກກໍເລົ່າເຣື່ອງທີ່ເກີດ
ຂຶ້ນໃຫ້ດານີເອນຮູ້
16 ດານີເອນໄດ້ເຂົ້າເຝົ້າພຣະຣາຊາໃນທັນທີ ແລະທູນຂໍໃຫ້ພຣະອົງເລື່ອນກຳນົດເວລາປະຫານ ເພື່ອວ່າທ່ານຈະ
ໄດ້ຖວາຍຄຳແກ້ຄວາມຝັນແດ່ພຣະອົງ

**ພຣະເຈົ້າຊົງບອກຄຳແກ້ຄວາມຝັນແກ່ດານີເອນ**

God Reveals Nebuchadnezzar'd Dream

17 ແລ້ວດານີເອນໄດ້ກັບຄືນເມືອເຮືອນຂອງຕົນ ແລະບອກເຣື່ອງທີ່ເກີດຂຶ້ນໃຫ້ ຮານານີຢາ ມີຊາເອນ ແລະອາຊາ
ຣີຢາເພື່ອນຂອງຕົນຮູ້
18 ແລະໄດ້ບອກໃຫ້ພວກເພື່ອນອ້ອນວອນ ຂໍໃຫ້ພຣະເຈົ້າທີ່ຢູ່ເທິງຟ້າສວັນຊົງໂຜດອະທິບາຍເຣື່ອງເລິກລັບນີ້ໃຫ້
ແກ່ພວກເຂົາ ເພື່ອພວກເຂົາຈະບໍ່ຖືກຂ້າຕາຍເຫມືອນຢ່າງທີ່ປຶກສາຄົນອື່ນໆໃນກຸງບາບີໂລນ
19 ແລ້ວໃນຄືນນັ້ນ ພຣະເຈົ້າໄດ້ຊົງເຜີຍເຣື່ອງເລິກລັບນີ້ໃຫ້ດານີເອນຮູ້ທາງນິມິດ ດັ່ງນັ້ນ ດານີເອນຈຶ່ງສັຣເສີນພ
ຣະເຈົ້າເທິງຟ້າສວັນວ່າ,
20 "ຂໍສັຣເສີນພຣະນາມຂອງພຣະເຈົ້າຕລອດໄປເປັນນິດ ພຣະອົງຊົງມີປັນຍາແລະມີເດຊານຸພາບ
21 ພຣະອົງຊົງບັງຄັບກາລເວລາ ຊົງແຕ່ງຕັ້ງແລະປົດພຣະຣາຊາ ຊົງປະທານປັນຍາແລະຄວາມຮູ້ຮອບດ້ານໃຫ້
ມະນຸດ
22 ຊົງເປີດເຜີຍສິ່ງເລິກແລບແລະລັບລີ້ ຊົງຮູ້ສິ່ງທີ່ຢູ່ໃນຄວາມມືດ ແລະຊົງມີແສງສວ່າງຢູ່ອ້ອມຮອບ
23 ໂອ ພຣະເຈົ້າແຫ່ງບັນພະບຸຣຸດຂອງຂ້າພຣະອົງ ຂ້າພຣະອົງສັຣເສີນແລະຖວາຍພຣະກຽດແດ່ພຣະອົງ ພຣະ
ອົງຊົງປະທານປັນຍາແລະກຳລັງໃຫ້ຂ້າພຣະອົງ ຊົງຕອບຄຳອ້ອນວອນຂອງຂ້າພຣະອົງ ແລະຊົງໃຫ້ພວກຂ້າພ
ຣະອົງຮູ້ຈັກຕອບພຣະຣາ ຊາ

**ດານີເອນບອກ ແລະແກ້ຄວາມຝັນໃຫ້ພຣະຣາຊາ**

Daniel interprets the Dream

24 ຕໍ່ມາ ດານີເອນໄດ້ເຂົ້າໄປຫາອາຣີໂອກ ຜູ້ທີ່ພຣະຣາຊາຊົງແຕ່ງຕັ້ງໃຫ້ຂ້ານັກປາດແຫ່ງກຸງບາບີໂລນ ທ່ານໄດ້
ເຂົ້າໄປ ແລະກ່າວແກ່ອາຣີໂອກວ່າ, "ຂໍຢ່າຂ້າພວກນັກປາດທ້ອນ ໂຜດນຳຕົວຂ້າພະເຈົ້າເຂົ້າໄປເຝົ້າພຣະຣາ
ຊາ ຂ້າພະເຈົ້າຈະແກ້ຄວາມຝັນຖວາຍພຣະອົງ"
25 ແລ້ວອາຣີໂອກກໍຟ້າວນຳຕົວດານີເອນເຂົ້າເຝົ້າພຣະຣາຊາ ແລະທູນພຣະອົງວ່າ, "ຂ້າພຣະອົງພົບຄົນຢູດາຜູ້
ນຶ່ງໃນຫມູ່ ພວກຊະເລີຍ ຊາຍຜູ້ນີ້ສາມາດແກ້ຄວາມຝັນຂອງພຣະອົງໄດ້"
26 ພຣະຣາຊາຊົງກ່າວກັບດານີເອນ (ຜູ້ມີຊື່ອີກຢ່າງນຶ່ງ ເບນເຕຊັສຊາ) ວ່າ, "ເຈົ້າສາມາດບອກ ແລະແກ້ຄວາມ
ຝັນຂອງເຮົາໄດ້ບໍ່?"
27 ດານີເອນທູນພຣະຣາຊາວ່າ, "ຂ້າແດ່ພຣະຣາຊາ ບໍ່ມີຫມໍວິຊາອາຄົມ ຫມໍມົນ ຫມໍມໍ ຫລືຫມໍດູຣຶກຍາມຄົນໃດ
ດອກບອກ ພຣະອົງຢ່າງນັ້ນໄດ້

28 ມີແຕ່ພຣະເຈົ້າເທິງຟ້າສວັນທີ່ຊົງສາມາດເຜີຍຄວາມເລິກລັບທັງຫລາຍໄດ້ ຂ້າແດ່ພຣະຣາຊາ ພຣະເຈົ້າໄດ້ຊົງບອກໃຫ້ພຣະອົງຮູ້ສິ່ງທີ່ຈະເກີດຂຶ້ນໃນອະນາຄົດ ຄວາມຝັນແລະນິມິດທີ່ເກີດຂຶ້ນໃນຂນະທີ່ພຣະອົງຊົງບັນທົມນັ້ນມີດັ່ງນີ້:

29 ຄືພຣະອົງຊົງຝັນເຖິງເຣື່ອງທີ່ຈະເກີດຂຶ້ນໃນອະນາຄົດ ເພາະພຣະເຈົ້າຜູ້ຊົງເຜີຍເຣື່ອງເລິກລັບໄດ້ສະແດງໃຫ້ພຣະອົງຮູ້ເຖິງສິ່ງທີ່ຈະເກີດຂຶ້ນ

30 ເຣື່ອງເລິກລັບນີ້ຊົງເຜີຍໃຫ້ຂ້າພຣະອົງຮູ້ ບໍ່ແມ່ນຍ້ອນຂ້າພຣະອົງເປັນຄົນສລາດກວ່າຄົນອື່ນໆດອກ ແຕ່ຍ້ອນພຣະເຈົ້າຢາກໃຫ້ພຣະຣາຊາຮູ້ຄຳແກ້ຄວາມຝັນ ແລະເຂົ້າໃຈພຣະດຳຣິໃນພຣະທັຍຂອງພຣະອົງເອງ

31 ຂ້າແດ່ພຣະຣາຊາ ໃນນິມິດຂອງພຣະອົງນັ້ນ ພຣະອົງໄດ້ທອດພຣະເນດເຫັນຮູບຂນາດໃຫຍ່ຢືນຢູ່ຊ້ອງພຣະພັກ ຮູບນີ້ສ່ອງແສງເຫລື້ອມແລະເປັນຕາຢ້ານ

32 ຫົວຂອງຮູບນີ້ເປັນຄຳຢ່າງດີທີ່ສຸດ ເອິກແລະແຂນເປັນເງິນ ແອວແລະກະໂພກເປັນທອງສຳລິດ

33 ຂາເປັນເຫລັກ ຕີນເປັນເຫລັກປົນດິນ

34 ຂນະພຣະອົງທອດພຣະເນດຢູ່ນັ້ນ ມີຫີນໃຫຍ່ກ້ອນນຶ່ງແຕກອອກມາເອງໂດຍບໍ່ມີໃຜເຮັດ ຫີນນີ້ໄດ້ກະທົບໃສ່ຕີນເຫລັກປົນດິນຂອງຮູບນັ້ນຈົນແຕກຫມຸ່ນໄປ

35 ແລ້ວໃນທັນໃດນັ້ນ ສ່ວນເປັນເຫລັກ ເປັນດິນ ເປັນທອງສຳລິດ ເປັນເງິນແລະຄຳກໍແຕກຫມຸ່ນໄປເຫມືອນເຂົ້າລີບໃນລານ ທີ່ລົມພັດປິວໄປໃນຍາມຮ້ອນ ໂດຍບໍ່ມີຮ່ອງຮອຍໃຫ້ພົບເຫັນເລີຍ ແຕ່ກ້ອນຫີນນັ້ນໄດ້ກາຍເປັນພູເຕັມພື້ນພິພົບ ຄວາມຝັນນັ້ນເປັນດັ່ງນີ້ແຫລະ

36 ຕໍ່ໄປ ຂ້າພຣະອົງຂໍແກ້ໃຫ້ພຣະອົງຊົງຊາບ ຂ້າແດ່ພຣະຣາຊາ ພຣະອົງຊົງເປັນຈອມພຣະຣາຊາທັງປວງ

37 ພຣະເຈົ້າເທິງຟ້າສວັນໄດ້ຊົງແຕ່ງຕັ້ງໃຫ້ພຣະອົງເປັນພຣະຣາຊາ ຊົງປະທານຣິດອຳນາດແລະກຽດຕິຍົດໃຫ້ພຣະອົງ

38 ພຣະເຈົ້າໄດ້ຊົງແຕ່ງຕັ້ງໃຫ້ພຣະອົງເປັນຜູ້ປົກຄອງຄົນຕລອດທັງສັດແລະນົກທັງປວງທີ່ອາສັຍຢູ່ໃນໂລກ ຫົວຄຳນັ້ນແມ່ນ ພຣະອົງເອງ

39 ຕໍ່ຈາກພຣະອົງໄປຈະມີຣາຊອານາຈັກນຶ່ງອີກ ເປັນຣາຊອານາຈັກນ້ອຍກວ່າຂອງພຣະອົງ ແລະຫລັງຈາກນັ້ນແມ່ນຣາຊອານາຈັກທີສາມ ເປັນຣາຊອານາຈັກທອງສຳລິດ ຊຶ່ງຈະມີອຳນາດແຜ່ໄປທົ່ວໂລກ

40 ແລ້ວຈະມີຣາຊອານາຈັກທີສີ່ ເປັນອານາຈັກທີ່ມີອຳນາດແລະແຂງດັ່ງເຫລັກ ຊຶ່ງສາມາດຕີສິ່ງທັງຫລາຍໃຫ້ຫັກແລະແຕກຫມຸ່ນໄດ້ ຣາຊອານາຈັກນີ້ຈະຫັກແລະທັບມ້າງຣາຊອານາຈັກກ່ອນໆທັງປວງ

41 ທີ່ພຣະອົງທອດພຣະເນດເຫັນຕີນແລະນິ້ວຕີນເປັນດິນປົນເຫລັກນັ້ນ ຫມາຍຄວາມວ່າຈະເປັນຣາຊອານາຈັກປະສົມ ມັນຈະມີຄວາມແຂງຂອງເຫລັກປົນຢູ່ດ້ວຍ ເພາະວ່າໄດ້ມີເຫລັກປະສົມຢູ່ກັບດິນຫນຽວ

42 ນິ້ວຕີນເປັນເຫລັກປົນດິນນັ້ນ ຫມາຍຄວາມວ່າຣາຊອານາຈັກນັ້ນຈະແຂງແຮງແຕ່ເສັຽຫາຍງ່າຍ

43 ທີ່ພຣະອົງທອດພຣະເນດເຫັນເຫລັກປະສົມດ້ວຍດິນຫນຽວນັ້ນ ພວກຜູ້ປົກຄອງຣາຊອານາຈັກນັ້ນ ຈະພຍາຍາມຮວບຮວມຄອບຄົວຂອງເຂົາເຂົ້າກັນດ້ວຍການແຕ່ງງານ ແຕ່ພວກເຂົາຈະເຮັດບໍ່ໄດ້ຢ່າງດຽວກັບເຫລັກທີ່ປະສົມເຂົ້າກັບດິນບໍ່ໄດ້

44 ໃນສມັຍພຣະຣາຊາເຫລົ່ານັ້ນປົກຄອງຢູ່ ພຣະເຈົ້າເທິງຟ້າສວັນຈະຊົງຈັດຕັ້ງຣາຊອານາຈັກອັນນຶ່ງຂຶ້ນ ຊຶ່ງຈະບໍ່ຖືກທຳລາຍແລະຈະຕັ້ງຢູ່ຕລອດໄປ ຣາຊອານາຈັກນີ້ຈະບໍ່ປຣາຊັຍແຕ່ຈະທຳລາຍຣາຊອານາຈັກອື່ນທັງປວງໃຫ້ຫມົດສິ້ນ

45 ທີ່ພຣະອົງທອດພຣະເນດເຫັນກ້ອນຫີນແຕກອອກຈາກພູເອງໂດຍບໍ່ມີໃຜເຮັດ ກ້ອນຫີນນັ້ນໄດ້ກະທົບກັບຮູບເຫລັກ ຮູບທອງສຳລິດ ຮູບດິນ ແລະຮູບເງິນແລະຄຳນັ້ນ ແມ່ນພຣະເຈົ້າອົງຍິ່ງໃຫຍ່ ໄດ້ຊົງບອກສິ່ງທີ່ຈະເກີດ

ຂຶ້ນໃນອະນາຄົດໃຫ້ພຣະຣາຊາຊົງຊາບ ຂ້າພຣະອົງໄດ້ທູນຖວາຍຄວາມຝັນແລະຄຳແກ້ແດ່ພຣະອົງຢ່າງຖືກຕ້ອງແລະເປັນຈິງ

**ກະສັດຊົງມອບຮາງວັນໃຫ້ດານີເອນ**

Daniel and His Friends Promoted

46 ແລ້ວກະສັດເນບູກາດເນສຊາໄດ້ຊົງຂາບລົງຕໍ່ໜ້າດານີເອນ ຊົງສັ່ງໃຫ້ນຳເຄື່ອງເຜົາບູຊາ ແລະເຄື່ອງຫອມບູຊາມາມອບໃຫ້ດານີເອນ

47 ພຣະອົງຊົງກ່າວວ່າ, "ພຣະເຈົ້າຂອງທ່ານຊົງເປັນພຣະເຈົ້າຂອງພຣະ ແລະຂອງພຣະຣາຊາທັງປວງ ແລະຊົງເປັນຜູ້ເຜີຍຄວາມເລິກລັບ ເພາະວ່າທ່ານສາມາດອະທິບາຍຄວາມເລິກລັບນີ້ໄດ້"

48 ແລ້ວພຣະຣາຊາໄດ້ມອບຕຳແໜ່ງສູງແລະສິ່ງຂອງອັນປະເສີດຫລາຍຢ່າງໃຫ້ແກ່ດານີເອນ ຄືຊົງແຕ່ງຕັ້ງໃຫ້ເປັນຜູ້ປົກຄອງແຂວງບາບີໂລນ

49 ແລະເປັນຫົວໜ້າພວກທີ່ປຶກສາຊາວບາບີໂລນ ເພື່ອຕອບສນອງຄຳທູນຂໍຂອງດານີເອນ ພຣະຣາຊາຊົງແຕ່ງຕັ້ງໃຫ້ຊັດຣັຄ ເມຊາກ ແລະອາເບດເນໂກ ຮັບຣາຊການຢູ່ໃນແຂວງບາບີໂລນ ແລະຍັງຊົງໃຫ້ດານີເອນຮັບຕຳແໜ່ງຢູ່ໃນພຣະຣາຊສຳນັກຕໍ່ໄປ

## 3 ກະສັດເນບູກາດເນສຊາ ສັ່ງໃຫ້ທຸກຄົນຂາບໄຫວ້ຮູບຄຳ

The Golden Image

1 ກະສັດເນບູກາດເນສຊາໄດ້ຊົງສ້າງຮູບຄຳຮູບນຶ່ງ ສູງຫົກສິບສອກ ແລະກວ້າງຫົກສອກ ຊົງແຕ່ງໄວ້ໃນທີ່ຣາບພຽງດູແລໃນແຂວງບາບີໂລນ

2 ແລ້ວພຣະອົງຊົງຮັບສັ່ງໃຫ້ບັນດາຂ້າຣາຊການຜູ້ໃຫຍ່ຂອງພຣະອົງ ຄືພວກເຈົ້າອຸປຣາຊ ເຈົ້າແຂວງ ຮອງເຈົ້າແຂວງ ຜູ້ປົກຄອງກຳແພງນະຄອນ ນາຍຄັງ ຜູ້ພິພາກສາ ຕຸລາການແລະບັນດາຂ້າຣາຊການຄົນອື່ນໆໃນແຂວງທັງໝົດ ມາຮ່ວມໃນງານສລອງຮູບຄຳທີ່ພຣະອົງຊົງສ້າງຂຶ້ນ

3 ແລ້ວບັນດາຂ້າຣາຊການທັງໝົດນີ້ໄດ້ມາສລອງພ້ອມກັນ ແລະໄດ້ຢືນຢູ່ຕໍ່ໜ້າຮູບຄຳນັ້ນ

4 ໂຄສົກຜູ້ນຶ່ງໄດ້ປະກາດດ້ວຍສຽງອັນດັງວ່າ, "ຄົນທຸກໆປະເທດ ທຸກໆເຊື້ອຊາດແລະພາສາ

5 ຕໍ່ໄປນີ້ພວກທ່ານຈະໄດ້ຍິນສຽງເປົ່າແກຕິດຕາມດ້ວຍສຽງປີ່ ສຽງພິນ ສຽງກະຈັບປີ່ ແລະສຽງແຄນ ແລ້ວຈະມີສຽງດົນຕຣີອື່ນໆດັງຂຶ້ນ ພໍໄດ້ຍິນສຽງດົນຕຣີໃຫ້ທ່ານທັງຫລາຍຂາບໄຫວ້ຮູບຄຳທີ່ກະສັດເນບູກາດເນສຊາຊົງສ້າງນີ້

6 ຜູ້ໃດບໍ່ຂາບໄຫວ້ຈະຖືກໂຍນເຂົ້າໄປໃນເຕົາໄຟທັນທີ"

7 ດັ່ງນັ້ນ ພໍຄົນທັງຫລາຍໄດ້ຍິນສຽງດົນຕຣີດັງຂຶ້ນຄົນທຸກໆປະເທດ ທຸກໆເຊື້ອຊາດແລະພາສາກໍຂາບໄຫວ້ຮູບຄຳທີ່ກະສັດເນບູກາດເນສຊາຊົງສ້າງນັ້ນ

**ຄົນຢູດາສາມຄົນຖືກຟ້ອງຮ້ອງ**

8 ມີຊາວບາບີໂລນບາງຄົນໄດ້ສວຍໂອກາດນີ້ ກ່າວຟ້ອງຄົນຢູດາ

9 ພວກເຂົາທູນກະສັດເນບູກາດເນສຊາວ່າ, "ຂໍຊົງພຣະຈະເຣີນເທີນ,

10 ພຣະອົງຊົງອອກຄຳສັ່ງແລ້ວວ່າ ພໍສຽງດົນຕຣີເລີ້ມດັງຂຶ້ນ ທຸກໆຄົນຈະຕ້ອງຂາບໄຫວ້ຮູບຄຳ

11 ຜູ້ໃດບໍ່ຂາບໄຫວ້ຈະຕ້ອງຖືກໂຍນເຂົ້າເຕົາໄຟ

12 ມີຄົນຢູດາບາງຄົນທີ່ພຣະຣາຊາຊົງແຕ່ງຕັ້ງໃຫ້ຮັບຣາຊການຢູ່ໃນແຂວງບາບີໂລນ ຄື ຊັດຣັຄ ເມຊາກ ແລະອາເບດເນໂກ ສາມຄົນນີ້ບໍ່ເຊື່ອຟັງຄຳສັ່ງຂອງພຣະອົງ ພວກເຂົາບໍ່ນັບຖືພຣະຂອງພຣະອົງແລະບໍ່ຍອມຂາບໄຫວ້ຮູບທີ່ພຣະອົງຊົງສ້າງ"

13 ດ້ວຍເຫດນີ້ ພຣະຣາຊາຈຶ່ງຊົງພິໂຣດ ແລະຊົງສັ່ງໃຫ້ນຳຊາຍສາມຄົນນັ້ນມາເຝົ້າ
14 ແລ້ວຊົງຖາມພວກເຂົາວ່າ, “ຊັດຣັຄ ເມຊາກ ແລະອາເບດເນໂກ ພວກເຈົ້າບໍ່ຍອມນັບຖືພຣະຂອງເຮົາ ແລະບໍ່
ຍອມຂາບໄຫວ້ຮູບຄຳທີ່ເຮົາໄດ້ສ້າງຂຶ້ນແມ່ນບໍ່?
15 ເອົາລະ ບັດນີ້ພໍພວກເຈົ້າໄດ້ຍິນສຽງແກສຽງປີ່ ສຽງພິນ ສຽງກະຈັບປີ່ ສຽງແຄນ ແລະສຽງດົນຕຣີອື່ນໆທັງຫມົດ
ໃຫ້ພວກເຈົ້າຈົ່ງຂາບໄຫວ້ຮູບຄຳນັ້ນ ຖ້າພວກເຈົ້າບໍ່ຍອມຂາບໄຫວ້ ພວກເຈົ້າຈະຕ້ອງຖືກໂຍນເຂົ້າເຕົາໄຟທັນ
ທີ ຫລືພວກເຈົ້າຄິດວ່າມີພຣະອົງອື່ນທີ່ຈະຊ່ອຍພວກເຈົ້າໃຫ້ລອດພົ້ນຈາກອຳນາດຂອງເຮົາບໍ່?
16 ຊັດຣັຄ ເມຊາກ ແລະອາເບດເນໂກທູນພຣະຣາຊາວ່າ, “ຂ້າແດ່ພຣະຣາຊາ ພວກຂ້າພຣະອົງຈະບໍ່ຂໍປ້ອງກັນ
ຕົວເອງໄວ້
17 ຖ້າພຣະເຈົ້າອົງທີ່ພວກຂ້າພຣະອົງຮັບໃຊ້ຢູ່ຊົງພໍພຣະທັຍຈະຊ່ອຍພວກຂ້າພຣະອົງໃຫ້ພົ້ນຈາກເຕົາທີ່ໄຟລຸກຢູ່
ຂ້າແດ່ພຣະຣາຊາ ພຣະອົງກໍຈະຊົງຊ່ອຍກູ້ພວກຂ້າພຣະອົງໃຫ້ພົ້ນຈາກພຣະຣາຊອຳນາດຂອງພຣະຣາຊາ
18 ແຕ່ຖ້າບໍ່ເປັນເຊັ່ນນັ້ນ ຂ້າແດ່ພຣະຣາຊາ ຂໍພຣະອົງຊົງຊາບວ່າ ພວກຂ້າພຣະອົງຈະບໍ່ນັບຖືພຣະຂອງພຣະອົງ
ແລະຈະບໍ່ຂາບໄຫວ້ຮູບຄຳທີ່ພຣະອົງຊົງສ້າງຂຶ້ນ”

### ຄົນຢູດາຖືກໂຍນເຂົ້າເຕົາໄຟ

The Fiery Furnace

19 ແລ້ວກະສັດເນບຸກາດເນສຊາຊົງພິໂຣດ ຊັດຣັຄ ເມຊາກ ແລະອາເບດເນໂກຢ່າງສຸດຂີດຈົນຫນ້າດຳຕາແດງ ພ
ຣະອົງຊົງສັ່ງໃຫ້ຄົນຂອງພຣະອົງໄປເຮັດໃຫ້ເຕົາໄຟຮ້ອນຂຶ້ນກວ່າເກົ່າເຖິງເຈັດເທົ່າ
20 ແລ້ວຊົງສັ່ງໃຫ້ຄົນຜູ້ເຂັ້ມແຂງທີ່ສຸດໃນກອງທັບຂອງພຣະອົງຜູກຊາຍສາມຄົນນີ້
21 ດັ່ງນັ້ນ ພວກເຂົາທັງສາມຈຶ່ງຖືກມັດຄາເຄື່ອງນຸ່ງ ມີເສື້ອຊັ້ນໃນຊັ້ນນອກ ມີຫມວກແລະຂອງອື່ນໆ ແລ້ວໂຍນ
ເຂົ້າໄປໃນເຕົາໄຟ
22 ເພາະວ່າຄຳສັ່ງຂອງພຣະຣາຊານັ້ນເດັດຂາດ ເຕົາໄຟນັ້ນກໍຮ້ອນທີ່ສຸດ ຈົນພວກຄົນທີ່ໂຍນພວກເຂົາເຂົ້າໄປໄດ້
ຖືກໄຟໄຫມ້ຕາຍ
23 ຊັດຣັຄ ເມຊາກ ແລະອາເບດເນໂກກໍຕົກລົງກາງກອງໄຟທັງໆທີ່ຍັງມັດຢູ່
24 ໃນເວລານັ້ນ ກະສັດເນບຸກາດເນສຊາ ໄດ້ຊົງລຸກຂຶ້ນໂດຍໄວຍ້ອນປະຫລາດພຣະທັຍ ແລະຊົງຖາມພວກທີ່ປຶກ
ສາວ່າ, “ພວກເຮົາໄດ້ມັດຊາຍສາມຄົນນັ້ນໂຍນເຂົ້າໄປໃນເຕົາໄຟບໍ່ແມ່ນບໍ່?” ພວກເຂົາທູນວ່າ, “ຂ້າແດ່ພຣະ
ຣາຊາ ແມ່ນແລ້ວພຣະເຈົ້າຂ້າ”
25 ພຣະອົງຊົງຖາມອີກວ່າ, “ແລ້ວເປັນຫຍັງເຮົາຈຶ່ງເຫັນຊາຍສີ່ຄົນກຳລັງຍ່າງຢູ່ໃນເຕົາໄຟ ພວກເຂົາບໍ່ໄດ້ມັດແລະ
ບໍ່ເຫັນເປັນອັນຕະຣາຍຫຍັງເລີຍ ຄົນທີສີ່ຊ້ຳພັດເບິ່ງຄ້າຍຄືກັນກັບເທວະດາ”

### ຄົນຢູດາໄດ້ຮັບການປົດປ່ອຍແລະໄດ້ເລື່ອນຊັ້ນ

26 ແລ້ວກະສັດເນບຸກາດເນສຊາໄດ້ສະເດັດຂຶ້ນໄປເທິງປາກເຕົາໄຟ ແລະຊົງເອີ້ນວ່າ, “ຊັດຣັຄ ເມຊາກ ອາເບດ
ເນໂກ ຜູ້ຮັບໃຊ້ຂອງພຣະເຈົ້າອົງສູງສຸດເອີຍ, ຈົ່ງອອກມາສາ” ພວກເຂົາຈຶ່ງໄດ້ອອກມາໃນທັນທີ
27 ຝ່າຍເຈົ້າອຸປຮາດ ເຈົ້າແຂວງ ຮອງເຈົ້າແຂວງ ແລະພວກທີ່ປຶກສາທັງຫມົດໄດ້ພ້ອມກັນມາເບິ່ງຄົນເຫລົ່ານີ້ ຊຶ່ງ
ບໍ່ໄດ້ຮັບອັນຕະຣາຍຫຍັງເລີຍ ຜົມແລະເຄື່ອງນຸ່ງກໍບໍ່ໄດ້ໄຫມ້ ແລະທັງບໍ່ມີກິ່ນຄວັນໄຟໃນຕົນຕົວຂອງເຂົາ
28 ພຣະຣາຊາຊົງກ່າວວ່າ, “ສາທຸການແດ່ພຣະເຈົ້າຂອງຊັດຣັຄ ຂອງເມຊາກ ແລະອາເບດເນໂກ ພຣະອົງຊົງໃຊ້
ເທວະດາລົງມາຊ່ອຍຄົນເຫລົ່ານີ້ ຊຶ່ງໄດ້ຮັບໃຊ້ແລະໄວ້ວາງໃຈໃນພຣະອົງ ພວກເຂົາບໍ່ເຊື່ອຟັງຄຳສັ່ງຂອງເຮົາ
ແລະຍ່ອມສ່ຽງຊີວິດຂອງເຂົາດີກວ່າທີ່ຈະຂາບໄຫວ້ພຣະໃດໆເວັ້ນໄວ້ແຕ່ພຣະເຈົ້າຂອງເຂົາເອງ

29 ບັດນີ້ ເຮົາອອກຄຳສັ່ງວ່າ ຖ້າຄົນໃດ ປະເທດໃດ ເຊື້ອຊາດໃດ ຫລືພາສາໃດເວົ້າຫມິ່ນປມາດພຣະເຈົ້າຂອງຊັດ
ຣັຄ ຂອງເມຊາກ ແລະອາເບດເນໂກ ເຂົາຜູ້ນັ້ນຈະຖືກຂ້າຢ່າງທຳຣຸນ ແລະທຳລາຍເຮືອນຊານຖິ້ມ ເພາະວ່າບໍ່
ມີພຣະອື່ນໃດທີ່ສາມາດຊ່ອຍໄດ້ເຫມືອນພຣະເຈົ້າອົງນີ້”
30 ແລ້ວກະສັດເນບຸກາດເນສຊາ ໄດ້ພຣະຣາຊທານເລື່ອນຍົດໃຫ້ຊັດຣັຄ ໃຫ້ເມຊາກ ແລະອາເບດເນໂກໃນ
ແຂວງບາບີໂລນ

## 4 ຄວາມຝັນເທື່ອທີສອງຂອງກະສັດເນບຸກາດເນສຊາ

Nebuchadnezzar’s Second Dream

1 ກະສັດເນບຸກາດເນສຊາຊົງສົ່ງເອກກະສານທີ່ມີເນື້ອຄວາມຕໍ່ໄປນີ້ໄປຍັງປະຊາຊົນທຸກໆປະເທດ ທຸກໆເຊື້ອ
ຊາດແລະພາສາທົ່ວໂລກວ່າ, “ຂໍຄວາມສຸກຄວາມຈະເຣີນຈົ່ງມີແດ່ທ່ານທັງຫລາຍ,
2 ຕໍ່ໄປນີ້ ເຮົາຈະບອກທ່ານທັງຫລາຍກ່ຽວກັບຫມາຍສຳຄັນ ແລະການອັສຈັນທີ່ພຣະເຈົ້າອົງສູງສຸດຊົງສະແດງຕໍ່
ເຮົາ
3 ຫມາຍສຳຄັນທີ່ພຣະເຈົ້າຊົງສະແດງຕໍ່ເຮົາຍິ່ງໃຫຍ່ແທ້ໆ ການອັສຈັນທີ່ພຣະອົງຊົງກະທຳມີຣິດທານຸພາບ
ຫລາຍ ພຣະເຈົ້າຊົງເປັນເຈົ້າຊີວິດຕລອດໄປເປັນນິດ ແລະຊົງປົກຄອງຕລອດໄປ
4 ເຮົາເນບຸກາດເນສຊາ ໄດ້ມີຊີວິດຢູ່ຢ່າງສງົບງຽບໃນວັງຂອງເຮົາ ມີຄວາມສຸກໃນຊັບສົມບັດອັນຫລວງຫລາຍ
5 ແຕ່ເຮົາຕື່ນຕົກໃຈໃນຄວາມຝັນ ແລະໄດ້ເຫັນນິມິດອັນຫນ້າຢ້ານໃນຂນະນອນຫລັບ
6 ເຮົາໄດ້ອອກຄຳສັ່ງຮຽກນັກປາດທັງຫມົດປະຈຳກະສັດໃນກຸງບາບີໂລນໃຫ້ມາຫາເຮົາເພື່ອແກ້ຄວາມຝັນໃຫ້ແກ່
ເຮົາ
7 ພວກຫມໍດູ ຫມໍມົນ ຫມໍວິຊາອາຄົມ ແລະຫມໍດູເລີກຍາມທັງຫມົດໃນກຸງບາບີໂລນມາແກ້ຄວາມຝັນໃຫ້ ພວກ
ເຂົາກໍມາ ເຮົາຈຶ່ງເລົ່າຄວາມຝັນໃຫ້ເຂົາຮູ້ ແຕ່ເຂົາບໍ່ສາມາດແກ້ໄດ້
8 ຕໍ່ມາ ດານີເອນໄດ້ເຂົ້າມາ (ດານີເອນມີຊື່ອີກຢ່າງນຶ່ງວ່າ ເບນເຕຊັສຊາ ຕາມຊື່ພຣະຂອງເຮົາ) ວິນຍານຂອງ
ພວກພຣະບໍຣິສຸດກໍສະຖິດຢູ່ນຳເຂົາ ເຮົາຈຶ່ງບອກຄວາມຝັນຂອງເຮົາໃຫ້ເຂົາຮູ້
9 ເຮົາບອກວ່າ ເບນເຕຊັສຊາ ຫົວຫນ້າພວກຫມໍດູເອີຍ, ເຮົາຮູ້ວ່າວິນຍານຂອງພວກພຣະບໍຣິສຸດສະຖິດຢູ່ນຳເຈົ້າ
ແລະຮູ້ວ່າເຈົ້າໄດ້ເຂົ້າໃຈຄວາມເລິກລັບທັງປວງ ຕໍ່ໄປນີ້ ແມ່ນຄວາມຝັນຂອງເຮົາຈົ່ງແກ້ໃຫ້ເຮົາແດ່
10 ຄືໃນຂນະທີ່ເຮົານອນຫລັບຢູ່ ເຮົາໄດ້ເຫັນນິມິດອັນນຶ່ງເປັນຕົ້ນໄມ້ສູງຕັ້ງແຕ່ຖ້າມກາງໂລກ
11 ຕົ້ນໄມ້ນັ້ນສູງຂຶ້ນເລື້ອຍໆຈົນຍອດຈຸຟ້າ ຈົນທຸກໆຄົນທົ່ວໂລກສາມາດເຫັນໄດ້
12 ໃບຂອງມັນງົດງາມ ມີຫມາກຫລາຍພໍທີ່ຄົນຫມົດໂລກຈະກິນອີ່ມ ສັດປ່າທັງຫລາຍໄດ້ອາສັຍຢູ່ໃຕ້ຮົ່ມຂອງມັນ
ຝູງນົກກໍເຮັດຮັງຢູ່ໃນງ່າ ທັງຄົນແລະສັດໄດ້ລ້ຽງຊີບດ້ວຍຫມາກມັນນັ້ນ
13 ຂນະທີ່ເຮົາຄິດເຖິງນິມິດນີ້ ເຮົາໄດ້ເຫັນອາຣັກຂາເທວະດາຕົນນຶ່ງລົງມາຈາກຟ້າສວັນ
14 ເທວະດາຕົນນີ້ໄດ້ປະກາດດ້ວຍສຽງດັງວ່າ ຈົ່ງບັກກົກໄມ້ນີ້ ຮານງ່າລິໃບຂອງມັນຖິ້ມ ເຮັດໃຫ້ພວກຂອງມັນກະ
ຈັດກະຈາຍໄປ ແລ້ວສັດປ່າກໍຈະຫນີອອກຈາກຮົ່ມ ຝູງນົກກໍຈະຫນີອອກຈາກງ່າ
15 ແລະໃຫ້ເອົາເຫລັກກັບທອງສຳລິດມັດກ້ຽງຕໍມັນປະໄວ້ໃນທົ່ງຫຍ້າ ໃຫ້ນ້ຳຫມອກຕົກລົງມາຖືກຄົນຜູ້ນີ້ ໃຫ້ເຂົາ
ລ້ຽງຊີບດ້ວຍສັດປ່າແລະພືດຜົນ
16 ເຂົາຈະບໍ່ມີຈິດໃຈມະນຸດເຫລືອຢູ່ອີກ ຈະມີຈິດໃຈສັດປ່າເປັນເວລາເຈັດປີ
17 ຄຳຕັດສິນຂອງອາຣັກຂາເທວະດາຕົນນັ້ນເປັນດັ່ງນີ້ແຫລະ, ດັ່ງນັ້ນ ຈົ່ງໃຫ້ຄົນທັງປວງທຸກທີ່ທຸກບ່ອນຮູ້ວ່າ ພ
ຣະເຈົ້າອົງສູງສຸດຊົງມີເດຊານຸພາບເຫນືອຣາຊອານາຈັກຂອງມະນຸດ ພຣະອົງຊົງແຕ່ງຕັ້ງກະສັດຂອງຊາດໃດ
ຊາດນຶ່ງຕາມພຣະ

ປະສົງຂອງພຣະອົງ ເຖິງແມ່ນວ່າຈະເປັນຄົນຕໍ່າຕ້ອຍກໍຕາມ”
18 ກະສັດເນບູກາດເນສຊາຊົງກ່າວວ່າ, “ຄວາມຝັນຂອງເຮົາເປັນດັ່ງນີ້ແຫລະ ເບນເຕຊັສຊາເອີຍ ບັດນີ້ ຈົ່ງແກ້
ຄວາມຝັນນີ້ໃຫ້ເຮົາແດ່ ບໍ່ມີທີ່ປຶກສາຄົນໃດຂອງເຮົາແກ້ໄດ້ ແຕ່ເຈົ້ານັ້ນອາດສາມາດແກ້ໄດ້ ເພາະວ່າວິນຍານ
ຂອງພຣະເຈົ້າຜູ້ບໍຣິສຸດໄດ້ສະຖິດຢູ່ນຳທ່ານ”

Daniel Interprets the Second Dream

19 ແລ້ວດານີເອນ (ຜູ້ມີຊື່ອີກຢ່າງນຶ່ງວ່າ ເບນເຕຊັສຊາ) ກໍອຸກໃຈ ບໍ່ສາມາດຈະເວົ້າອັນໃດໄດ້ ພຣະຣາຊາຊົງກ່າວ
ວ່າ, “ເບນເຕຊັສຊາເອີຍ ຢ່າໃຫ້ຄວາມຝັນແລະສິ່ງທີ່ຈະເກີດຂຶ້ນຕາມນັ້ນ ເຮັດໃຫ້ທ່ານຕົກໃຈເລີຍ” ເບນເຕ
ຊັສຊາທູນຕອບວ່າ, “ຂ້າແດ່ພຣະຣາຊາ ຂໍໃຫ້ຄວາມຝັນແລະຄຳແກ້ຄວາມຝັນນັ້ນ ຕົກຖືກພວກສັດຕຣູຂອງພ
ຣະອົງເສັຽ
20 ພຣະອົງຊົງຝັນເຫັນຕົ້ນໄມ້ໃຫຍ່ສູງຈົນຍອດຈຸຟ້າ ທຸກໆຄົນທົ່ວໂລກສາມາດເຫັນໄດ້
21 ໃບຂອງມັນງົດງາມ ແລະໝາກຂອງມັນກໍພໍທີ່ຄົນໝົດໂລກຈະກິນອີ່ມໄດ້ ສັດປ່າທັງຫລາຍອາສັຍຢູ່ໃຕ້ຮົ່ມ
ຂອງມັນ ແລະຝູງນົກກໍເຮັດຮັງຢູ່ຕາມກິ່ງກ້ານ
22 ຂ້າແດ່ພຣະຣາຊາ ຕົ້ນໄມ້ນັ້ນໝາຍເຖິງພຣະອົງຜູ້ຊົງຍິ່ງໃຫຍ່ແລະເຂັ້ມແຂງ ຄວາມຍິ່ງໃຫຍ່ຂອງພຣະອົງສູງ
ສົ່ງຈົນຈຸຟ້າ ແລະພຣະເດຊານຸພາບກໍແຜ່ກະຈາຍໄປທົ່ວໂລກ
23 ຂນະທີ່ພຣະຣາຊາຊົງເຝົ້າເບິ່ງ ມີເທວະດາຕົນນຶ່ງມາຈາກຟ້າສວັນ ແລະເວົ້າວ່າ ຈົ່ງບັກກົກໄມ້ນີ້ແລະທຳລາຍ
ຖິ້ມໃຫ້ປະແຕ່ຕໍມັນໄວ້ໃນດິນ ແລ້ວໃຫ້ເອົາເຫລັກແລະທອງສຳຣິດມັດກ້ຽວມັນປະໄວ້ທີ່ນັ້ນໃນທົ່ງນາບ່ອນທີ່ມີ
ຫຍ້າ ໃຫ້ນ້ຳໝອກຕົກລົງມາຖືກໂຕມັນແລະໃຫ້ມັນຢູ່ທີ່ນັ້ນກັບສັດປ່າເປັນເວລາເຈັດປີ
24 ຂ້າແດ່ພຣະຣາຊາ ການນີ້ແມ່ນພຣະເຈົ້າອົງສູງສຸດຊົງປະກາດສິ່ງທີ່ຈະເກີດຂຶ້ນກັບພຣະອົງ
25 ຄືພຣະອົງຈະຖືກຂັບໄລ່ອອກຈາກສັງຄົມມະນຸດ ຈະຊົງມີຊີວິດຢູ່ກັບສັດປ່າ ຈະສເວີຍຫຍ້າແທນອາຫານ
ເຫມືອນງົວ ແລະຈະຊົງບັນທົມຫລັບຢູ່ກາງປ່າເປັນເວລາເຈັດປີ ແລ້ວພຣະອົງຈະຊົງປ່ຽນໃຈຍອມຮັບວ່າ ພຣະ
ເຈົ້າອົງສູງສຸດຊົງປົກຄອງຣາຊອານາຈັກຂອງມະນຸດ ແລະຊົງແຕ່ງຕັ້ງກະສັດທັງປວງຕາມທີ່ພຣະອົງຊົງພໍພຣະ
ທັຍ
26 ທີ່ເທວະດາໄດ້ສັ່ງໃຫ້ຕໍຮາກເຫລືອໄວ້ໃນດິນນັ້ນ ໝາຍຄວາມວ່າພຣະອົງຈະໄດ້ເປັນກະສັດອີກ ໃນເມື່ອພຣະ
ອົງຊົງປ່ຽນໃຈຍອມຮັບວ່າພຣະເຈົ້າຊົງປົກຄອງໂລກ
27 ຂ້າແດ່ພຣະຣາຊາ ດ້ວຍເຫດນີ້ຂໍຊົງຮັບເອົາຄຳກາບທູນຂອງຂ້າພຣະອົງ ຂໍພຣະອົງເລີກເຮັດບາບ ແລະເຮັດ
ແຕ່ຄວາມດີຈົ່ງເມດຕາສົງສານຄົນທຸກຍາກ ຍ້ອນການເຮັດດີຢ່າງນີ້ຈຶ່ງຈະກຳຈັດຄວາມຊົ່ວທີ່ພຣະອົງຊົງກະທຳ
ມານັ້ນອອກໄດ້ ແລ້ວພຣະອົງຈະຈະເຣີນຮຸ່ງເຮືອງສືບຕໍ່ໄປ

Nebuchadnezzar’s Humiliation

28 ຫລັງຈາກນັ້ນມາໄດ້ສິບສອງເດືອນ ຄວາມຝັນທັງໝົດນີ້ກໍໄດ້ກາຍເປັນຈິງຕໍ່ກະສັດເນບູກາດເນສຊາ
29 ຄືເມື່ອພຣະອົງຊົງຍ່າງຢູ່ໃນສວນເທິງຫລັງຄາພຣະຣາຊວັງກຸງບາບີໂລນ
30 ພຣະອົງໄດ້ຊົງກ່າວວ່າ, “ກຸງບາບີໂລນນີ້ເປັນເມືອງໃຫຍ່ຫລາຍ ເຮົາໄດ້ສ້າງມັນມາໃຫ້ເປັນເມືອງຫລວງຂອງ
ເຮົາ ເພື່ອສະແດງເຖິງອຳນາດວາສນາ ແລະກຽດຕິຍົດຊື່ສຽງຂອງເຮົາ”
31 ແລ້ວໃນຂນະທີ່ພຣະອົງຊົງກຳລັງຍ່າງຢູ່ນັ້ນ ໄດ້ມີພຣະສຸຣະສຽງດັງລົງມາຈາກຟ້າສວັນວ່າ, “ກະສັດເນບູກາດ
ເນສຊາເອີຍ, ຈົ່ງຟັງເຮົາເວົ້າ ບັດນີ້ຣາຊອານາຈັກຂອງເຈົ້າໄດ້ພາກຈາກເຈົ້າໄປແລ້ວ
32 ເຈົ້າຈະຖືກຂັບໄລ່ອອກຈາກສັງຄົມມະນຸດ ແລະຈະມີຊີວິດຢູ່ກັບພວກສັດປ່າ ຈະກິນຫຍ້າເຫມືອນງົວຢູ່ເປັນເວ
ລາເຈັດປີ ແລ້ວເຈົ້າຈະປ່ຽນໃຈຍອມຮັບວ່າ ພຣະເຈົ້າອົງສູງສຸດຊົງມີຣິດອຳນາດເຫນືອຣາຊອານາຈັກຂອງມະ
ນຸດ ແລະຍອມຮັບວ່າພຣະອົງຊົງແຕ່ງຕັ້ງກະສັດຂອງຊາດໃດຊາດນຶ່ງຕາມທີ່ພຣະອົງຊົງພໍພຣະທັຍ”

33 ເພາະຄຳນີ້ໄດ້ກາຍເປັນຈິງໃນທັນທີ ຄືກະສັດເນບຸກາດເນສຊາ ໄດ້ຖືກຂັບໄລ່ອອກຈາກສັງຄົມມະນຸດ ແລະໄດ້
ກິນຫຍ້າເຫມືອນງົວ ນ້ຳຫມອກໄດ້ຕົກຖືກພຣະກາຍຂອງພຣະອົງ ຜົມກໍຍາວເຫມືອນຂົນນົກອິນຊີ ແລະເລັບພ
ຣະຫັດຂອງພຣະອົງກໍຍາວເຫມືອນເລັບນົກ

**ກະສັດເນບຸກາດເນສຊາສັຣເສີນພຣະເຈົ້າ**

Nebuchadnezzar Praises God

34 ເມື່ອຫມົດກຳນົດເວລານັ້ນແລ້ວ ເຮົາເນບຸກາດເນສຊາໄດ້ເງີຍຫນ້າຂຶ້ນທ້ອງຟ້າ ແລ້ວຈິດໃຈຂອງເຮົາກໍກັບ
ກາຍເປັນປົກກະຕິ ເຮົາຈຶ່ງກ່າວສັຣເສີນພຣະເຈົ້າອົງສູງສຸດ ຖວາຍພຣະກຽດແລະຄວາມສະງ່າຣາສີແດ່ພຣະ
ອົງຜູ້ຊົງພຣະຊົນຢູ່ເປັນນິດ    ພຣະອົງຊົງຄອບຄອງຕລອດໄປ ຣາຊອານາຈັກຂອງພຣະອົງດຳຣົງຢູ່ເປັນນິດ
35 ພຣະອົງຊົງຖືວ່າພົນໂລກບໍ່ສຳຄັນຫຍັງ ເທວະດາຢູ່ເທິງຟ້າສວັນແລະມະນຸດໃນໂລກກໍຢູ່ໃຕ້ການປົກຄອງຂອງ
ພຣະອົງ ບໍ່ມີໃຜຈະຂັດຂວາງນ້ຳພຣະທັຍຂອງພຣະອົງ ຫລືຄັດຄ້ານສິ່ງທີ່ພຣະອົງຊົງກະທຳໄດ້
36 ເມື່ອຈິດໃຈຂອງເຮົາເປັນປົກກະຕິແລ້ວ ຄວາມສະງ່າຣາສີແຫ່ງຣາຊອານາຈັກຂອງເຮົາ ກຽດຕິຍົດແລະຄວາມ
ຍິ່ງໃຫຍ່ຂອງເຮົາໄດ້ຖືກມອບໃຫ້ເຮົາອີກ ພວກທີ່ປຶກສາແລະເຈົ້ານາຍຊັ້ນຜູ້ໃຫຍ່ຂອງເຮົາກໍຍິນດີຕ້ອນຮັບເຮົາ
ພຣະຣາຊອຳນາດຂອງເຮົາກໍໄດ້ຖືກມອບຄືນມາໃຫ້ເຮົາພ້ອມກັບກຽດຕິຍົດອັນຍິ່ງໃຫຍ່ກວ່າແຕ່ກ່ອນ
37 ບັດນີ້ ເຮົາເນບຸກາດເນສຊາ ຂໍສັຣເສີນຍ້ອງຍໍ ຖວາຍພຣະກຽດແລະຄວາມສະງ່າຣາສີແດ່ພຣະເຈົ້າເທິງຟ້າສວ
ັນ ພຣະອົງຊົງກະທຳທຸກສິ່ງຖືກຕ້ອງ ການກະທຳຂອງພຣະອົງຍຸດຕິທັມດີສເມີແລະຊົງເຮັດໃຫ້ບຸກຄົນຜູ້ທະເຍີ
ທະຍານຖ່ອມຕົວລົງ

## 5 ງານລ້ຽງຂອງເບນຊັສຊາ

Belshazzar's Feast

1 ເມື່ອເບນຊັສຊາໄດ້ເປັນກະສັດ ພຣະອົງໄດ້ເຊີນເຈົ້ານາຍນຶ່ງພັນຄົນມາໃນງານລ້ຽງທີ່ຈັດຂຶ້ນຢ່າງໃຫຍ່ໂຕມະ
ໂຫຣານ ແລະໄດ້ສເວີຍນ້ຳອະງຸ່ນກັບພວກເຫລົ່ານັ້ນ
2 ຂນະພິດເຫລົ້າພວມຂຶ້ນ ກະສັດເບນຊັສຊາໄດ້ຊົງສັ່ງໃຫ້ເອົາຈອກແລະຖ້ວຍທີ່ເຮັດດ້ວຍເງິນດ້ວຍຄຳມາໃຊ້
ຖ້ວຍເຫລົ່ານີ້ກະສັດເນບຸກາດເນສຊາພຣະຣາຊບິດາຂອງພຣະອົງໄດ້ເອົາມາຈາກວິຫານໃນນະຄອນເຢຣູຊາ
ເລັມ ພຣະອົງໄດ້ຊົງໃຊ້ເຂົາໄປເອົາຈອກແລະຖ້ວຍເຫລົ່ານັ້ນມາກໍເພື່ອພຣະອົງພ້ອມທັງມະເຫສີ ກັບພວກເຈົ້າ
ນາຍແລະນາງສນົມທັງຫລາຍຈະໄດ້ດື່ມຈາກພາຊນະເຫລົ່ານີ້
3 ດັ່ງນັ້ນຈອກແລະຖ້ວຍຄຳຈຶ່ງຖືກນຳມາໃນທັນທີ ທຸກໆຄົນໄດ້ດື່ມຈາກຈອກເຫລົ່ານີ້
4 ພວກເຂົາໄດ້ດື່ມເຫລົ້າອະງຸ່ນແລະສັຣເສີນຮູບພຣະທີ່ເຮັດດ້ວຍຄຳ ເງິນ ທອງສຳຣິດ ເຫລັກ ໄມ້ແລະຫີນ

The Writing on the Wall

5 ໃນທັນນັ້ນມີມືມະນຸດປາກົດໃຫ້ເຫັນ ມືນັ້ນໄດ້ຂຽນຝາພຣະຣາຊວັງບ່ອນມີໂຄມໄຟໄຕ້ຮຸ່ງຢູ່ ພຣະຣາຊາໄດ້
ເຫັນຂນະກຳລັງຂຽນຢູ່
6 ພຣະພັກຂອງພຣະອົງໄດ້ຂາວຊີດ ແລະຕົກພຣະທັຍຫລາຍຈົນຂາສັ່ນ
7 ພຣະອົງຈຶ່ງຊົງຮ້ອງບອກໃຫ້ຄົນນຳເອົາຫມໍມົນ ຫມໍວິຊາອາຄົມ ແລະຫມໍດູຣືກຍາມເຂົ້າມາເຝົ້າ ເມື່ອພວກເຂົາ
ມາເຖິງພຣະອົງໄດ້ຊົງກ່າວກັບພວກເຂົາວ່າ, “ໃຜອ່ານແລະແປຄວາມຫມາຍທີ່ຂຽນນີ້ໄດ້ ຜູ້ນັ້ນຈະໄດ້ຫົ່ມເສື້ອ
ສາມາດສີມ່ວງແຂວນສາຍສ້ອຍຄຳກຽດຕິຍົດ ແລະຈະຖືກແຕ່ງຕັ້ງໃຫ້ເປັນອຸປຣາຊຕຣີໃນຣາຊອານາຈັກ”
8 ພວກທີ່ປຶກສາທັງຫມົດຂອງພຣະຣາຊາຈຶ່ງໄດ້ເຂົ້າມາແຕ່ບໍ່ມີໃຜສາມາດອ່ານຄຳຂຽນຫລືບອກຄວາມຫມາຍ
ໃຫ້ພຣະຣາຊາໄດ້

9 ດ້ວຍເຫດນີ້ ພຣະຣາຊາຈຶ່ງເສັຽພຣະທັຍ ແລະມີພຣະພັກຂາວຊີດ ພວກເຈົ້ານາຍຊັ້ນສູງຂອງພຣະອົງກໍບໍ່ຮູ້ວ່າຈະເຮັດແນວໃດ

10 ເມື່ອພຣະຣາຊມານດາໄດ້ຍິນສຽງເວົ້າຂອງພຣະຣາຊາ ແລະພວກເຈົ້ານາຍ ພຣະນາງກໍສະເດັດເຂົ້າມາໃນຫ້ອງຈັດງານລ້ຽງແລ້ວຊົງກ່າວວ່າ, "ຂໍຈົ່ງພຣະຈະເຣີນເທີນ ຂໍພຣະອົງຢ່າຕົກໃຈຈົນຫນ້າຂາວຊີດເລີຍ

11 ເພາະວ່າໃນຣາຊອານາຈັກຂອງພຣະອົງ ຍັງມີຊາຍຜູ້ນຶ່ງມີວິນຍານຂອງພຣະເຈົ້າຜູ້ບໍຣິສຸດສະຖິດຢູ່ນຳ ຊາຍຜູ້ນີ້ເມື່ອຄາວບິດາຂອງພຣະອົງເປັນກະສັດ ເຂົາໄດ້ສະແດງຄວາມສລາດຫລັກແຫລມ ຄວາມຮອບຮູ້ແລະມີສະຕິປັນຍາດີເຫມືອນປັນຍາຂອງພວກພຣະ ກະສັດເນບຸກາດເນສຊາພຣະຣາຊບິດາຂອງຝ່າບາດໄດ້ແຕ່ງຕັ້ງໃຫ້ເຂົາເປັນຫົວຫນ້າພວກຫມໍດູ ຫມໍມົນ  ຫມໍວິຊາອາຄົມ ແລະຫມໍດູເລີກຍາມ

12 ເຂົາມີຄວາມສາມາດທີ່ສຸດ ມີຄວາມສລາດແລະຊຳນິຊຳນານໃນການແກ້ຄວາມຝັນ ແກ້ບັນຫາແລະແກ້ຄວາມເລິກລັບທັງຫລາຍໄດ້ ດັ່ງນັ້ນ ຂໍຈົ່ງເອີ້ນເອົາດານີເອນຄົນນີ້ (ຜູ້ຊຶ່ງພຣະຣາຊາໄດ້ເອີ້ນເຂົາວ່າເບນເຕຊັສຊາ) ເຂົ້າມາເຝົ້າ ແລ້ວໃຫ້ເຂົາບອກຄວາມຫມາຍທັງຫມົດນີ້ໃຫ້ແກ່ຝ່າບາດ"

**ດານີເອນແປຄຳທີ່ຂຽນ**

The Writing on the Wall Interpreted

13 ດານີເອນໄດ້ຖືກຮຽກຕົວນຳມາເຝົ້າພຣະຣາຊາທັນທີ ພຣະຣາຊາຊົງກ່າວຕໍ່ດານີເອນວ່າ, "ທ່ານແມ່ນດານີເອນບໍ່? ແລະເປັນຄົນນຶ່ງໃນບັນດາພວກຊະເລີຍທີ່ເປັນຊາວຢູດາ ຊຶ່ງພຣະຣາຊບິດາຂອງເຮົາໄດ້ນຳມາຈາກປະເທດຢູດາແມ່ນບໍ່?

14 ເຮົາໄດ້ຍິນວ່າວິນຍານຂອງພວກພຣະສະຖິດຢູ່ນຳທ່ານ ແລະວ່າທ່ານເປັນຜູ້ຊຳນານ ມີຄວາມຮູ້ແລະສະຕິປັນຍາຢ່າງແປກປລາດ

15 ພວກທີ່ປຶກສາແລະພວກຫມໍມົນໄດ້ເຂົ້າມາອ່ານແລະແປຄວາມຫມາຍຂໍ້ຂຽນນີ້ໃຫ້ເຮົາຮູ້ ແຕ່ເຂົາບໍ່ສາມາດຄົ້ນຄວ້າຫາຄວາມຫມາຍໄດ້

16 ບັດນີ້ເຮົາໄດ້ຍິນວ່າທ່ານສາມາດຄົ້ນຫາຄວາມຫມາຍ ແລະອະທິບາຍຄວາມເລິກລັບໄດ້ ສະນັ້ນ ຖ້າທ່ານສາມາດອ່ານແລະບອກຄວາມຫມາຍຂໍ້ຂຽນນີ້ໃຫ້ເຮົາຮູ້ໄດ້ ທ່ານຈະໄດ້ຫົ່ມເສື້ອສາມາດສີມ່ວງ ແຂວນສາຍຄໍຄຳກຽດຕິຍົດ ແລະຈະໄດ້ເປັນອຸປຣາຊຕຣີໃນຣາຊອານາຈັກ"

17 ດານີເອນໄດ້ທູນຕອບວ່າ, "ຂ້າແດ່ພຣະຣາຊາ ຂໍພຣະອົງເກັບຂອງພຣະຣາຊານັ້ນໄວ້ ຈົ່ງພຣະຣາຊທານໃຫ້ຜູ້ອື່ນເສັຽ ສ່ວນຂ້າພຣະອົງຈະຂໍອ່ານ ແລະທູນຖວາຍຄວາມຫມາຍຂໍ້ຂຽນນີ້ໃຫ້ພຣະອົງລ້າໆ

18 ຄືພຣະເຈົ້າອົງສູງສຸດໄດ້ຊົງແຕ່ງຕັ້ງເນບຸກາດເນສຊາພຣະຣາຊບິດາຂອງພຣະອົງໃຫ້ເປັນມະຫາຣາຊາ ຊົງປະທານກຽດຕິຍົດແລະຊື່ສຽງໃຫ້ພຣະອົງ

19 ພຣະອົງຈຶ່ງຊົງຍິ່ງໃຫຍ່ຫລາຍຈົນຄົນທຸກປະເທດ ທຸກເຊື້ອຊາດແລະພາສາຢ້ານກົວຕົວສັ່ນ ຖ້າພຣະອົງປະສົງຈະປະຫານຊີວິດຜູ້ໃດກໍຊົງປະຫານໄດ້ໂລດ ຖ້າປະສົງຈະໃຫ້ໃຜມີຊີວິດຢູ່ກໍຊົງໂຜດໃຫ້ຜູ້ນັ້ນມີຊີວິດຢູ່ໄດ້ ຊົງປະທານຍົດ ແລະຖອດຍົດທຸກຄົນໄດ້ຕາມພຣະປະສົງ

20 ແຕ່ຍ້ອນພຣະອົງມີຄວາມທະເຍີທະຍານ ມີພຣະທັຍແຂງກະດ້າງແລະກະທຳການຊົ່ວຮ້າຍ ພຣະອົງຈຶ່ງຖືກປົດອອກຈາກ  ພຣະຣາຊບັນລັງແລະສູນເສັຽກຽດຕິຍົດ

21 ຊົງຖືກຂັບໄລ່ອອກຈາກສັງຄົມມະນຸດ ແລະມີນ້ຳພຣະທັຍເຫມືອນດັ່ງໃຈສັດ ຊົງມີຊີວິດຢູ່ກັບຝູງລໍປ່າ ຊົງກິນຫຍ້າເຫມືອນງົວ ແລະຊົງບັນທົມຫລັບຢູ່ກາງປ່າຈົນເທົ່າຮອດມື້ພຣະອົງຊົງປ່ຽນໃຈຍອມຮັບວ່າ ພຣະເຈົ້າອົງສູງສຸດຊົງປົກຄອງຣາຊອານາຈັກຂອງມະນຸດ ແລະຊົງແຕ່ງຕັ້ງກະສັດທັງປວງຕາມທີ່ພຣະອົງຊົງພໍພຣະທັຍ

22 ຂ້າແດ່ພຣະຣາຊໂອຣົດຂອງກະສັດເນບຸກາດເນສຊາ ແຕ່ພຣະອົງນັ້ນເຖິງແມ່ນວ່າຊົງຊາບເຣື່ອງນີ້ແລ້ວກໍຕາມກໍບໍ່ໄດ້ຖ່ອມພຣະທັຍເລີຍ

23 ຄືພຣະອົງຊົງຖືຕົນວ່າຍິ່ງໃຫຍ່ເທົ່າກັບພຣະຜູ້ເປັນເຈົ້າເທິງຟ້າສວັນ ຊົງນຳເອົາຈອກແລະຖ້ວຍມາຈາກວິຫານ
ຂອງພຣະຜູ້ເປັນເຈົ້າ ພຣະອົງພ້ອມດ້ວຍພວກເຈົ້ານາຍຊັ້ນສູງ ມະເຫສີແລະນາງສນົມທັງຫລາຍຂອງພຣະອົງ
ໄດ້ດື່ມເຫລົ້າອະງຸ່ນຈາກຈອກເຫລົ່ານັ້ນ ແລ້ວກ່າວສັຣເສີນຮູບພຣະທີ່ເຮັດດ້ວຍຄຳ ດ້ວຍເງິນ ດ້ວຍທອງສຳຣິດ
ດ້ວຍເຫລັກ ດ້ວຍໄມ້ແລະຫີນ ພຣະເຫລົ່ານີ້ບໍ່ສາມາດຮູ້ເຫັນແລະໄດ້ຍິນອັນໃດໄດ້ ແຕ່ພຣະອົງບໍ່ໄດ້ຖວາຍພ
ຣະກຽດແດ່ພຣະເຈົ້າອົງປົກຄອງຊີວິດຂອງພຣະອົງ ແລະປົກຄອງທຸກໆສິ່ງທີ່ພຣະອົງຊົງກະທຳ
24 ດ້ວຍເຫດນີ້ແຫລະ ພຣະເຈົ້າຈຶ່ງສົ່ງມືມາຂຽນຂໍ້ຄວາມເຫລົ່ານີ້
25 ຕໍ່ໄປນີ້ແມ່ນຂໍ້ຄວາມທີ່ຂຽນຄື: ເມເນ ເມເນ ເຕເກລ ແລະປາຣສິນ
26 ຄວາມຫມາຍຂອງມັນມີດັ່ງນີ້ ຄຳວ່າ ເມເນ ແມ່ນພຣະເຈົ້າຊົງນັບຈຳນວນມື້ແຫ່ງຣາຊອານາຈັກຂອງພຣະອົງ
ໄວ້ແລ້ວ ແລະຊົງເຮັດໃຫ້ຣາຊອານາຈັກນັ້ນສິ້ນສຸດລົງ
27 ຄຳວ່າ ເຕເກລ ແມ່ນພຣະອົງຊົງຖືກຊັ່ງນ້ຳຫນັກໃນເຄື່ອງຊັ່ງ ແລະຊົງເຫັນວ່າຍັງເບົາຢູ່ຫລາຍ
28 ຄຳວ່າ ເປເຣສ ແມ່ນຣາຊອານາຈັກຂອງພຣະອົງຈະຖືກແບ່ງອອກໃຫ້ຄົນເມເດັຽ ແລະຄົນເປີເຊັຽ”
29 ແລ້ວກະສັດເບນຊັສຊາຊົງສັ່ງໃຫ້ເຂົາຫົ່ມເສື້ອສາມາດສີມ່ວງໃຫ້ດານີເອນທັນທີ ແລະໃຫ້ແຂວນສາຍຄໍຄຳກຽດ
ຕິຍົດພ້ອມກັບຊົງແຕ່ງຕັ້ງໃຫ້ເປັນອຸປຣາຊຕຣີໃນຣາຊອານາຈັກ
30 ໃນຄືນມື້ນັ້ນເອງ ເບນຊັສຊາກະສັດບາບີໂລນກໍຖືກປະຫານຊີວິດ
31 ກະສັດດາຣິອຸສຄົນເມເດັຽ ຈຶ່ງຍຶດອຳນາດ ແລະໄດ້ປົກຄອງຣາຊອານາຈັກ (ເວລານັ້ນກະສັດດາຣິອຸສຊົງມີພ
ຣະຊົນໄດ້ຫົກສິບສອງປີ)

## 6 ດານີເອນໃນຖ້ຳສິງ

The Plot against Daniel

1 ກະສັດດາຣິອຸສໄດ້ຊົງແຕ່ງຕັ້ງເຈົ້າແຂວງຮ້ອຍຊາວຄົນ ໃຫ້ປົກຄອງທົ່ວຣາຊອານາຈັກຂອງພຣະອົງ
2 ຄັນແລ້ວ ພຣະອົງຊົງເລືອກດານີເອນກັບອີກສອງຄົນເປັນຜູ້ກວດຣາຊການແຜ່ນດິນ ເພື່ອດູແລຮັກສາຜົນ
ປໂຍດຂອງພຣະຣາຊາ
3 ໃນບໍ່ເທິງດານີເອນກໍສະແດງໃຫ້ກະສັດດາຣິອຸສເຫັນວ່າ ທ່ານກະທຳການໄດ້ດີກວ່າຜູ້ກວດຣາຊການແລະເຈົ້າ
ແຂວງຄົນອື່ນໆ ເພາະວິນຍານປະເສີດສະຖິດຢູ່ກັບທ່ານແລະພຣະຣາຊາຈຶ່ງຊົງພິຈາຣະນາແຕ່ງຕັ້ງທ່ານໃຫ້
ເປັນຜູ້ຄອບຄອງທົ່ວຣາຊອານາຈັກ
4 ແລ້ວຜູ້ກວດກາແລະເຈົ້າແຂວງຄົນອື່ນໆ ໄດ້ພຍາຍາມຊອກຈັບເອົາຄວາມຜິດພາດໃນການບໍຣິຫານຣາຊການ
ແຜ່ນດິນຂອງດານີເອນ ແຕ່ພວກເຂົາບໍ່ສາມາດພົບເຫັນຄວາມຜິດຫລືການທຸຈຣິດໃດໆໄດ້ ຍ້ອນວ່າດານີເອນ
ທ່ານເປັນຄົນສັດຊື່ ແລະບໍ່ເຮັດສິ່ງທີ່ຜິດຫລືການເສື່ອມເສັຽໃດໆ
5 ພວກເຂົາຈຶ່ງເວົ້າຕໍ່ກັນແລະກັນວ່າ, “ເຮົາຈະຫາເຣື່ອງມາຟ້ອງຮ້ອງດານີເອນບໍ່ໄດ້ດອກ ນອກຈາກເຣື່ອງທີ່ກ່ຽວ
ຂ້ອງກັບສາສນາຂອງເຂົາເທົ່ານັ້ນ”
6 ດັ່ງນັ້ນ ພວກເຂົາຈຶ່ງເຂົ້າໄປເຝົ້າກະສັດດາຣິອຸສແລ້ວກາບທູນວ່າ, “ຂ້າແດ່ພຣະຣາຊາ ຂໍຊົງພຣະຈະເຣີນເທີນ
7 ພວກຂ້າພຣະອົງທັງຫມົດຜູ້ບໍຣິຫານຣາຊການແຜ່ນດິນຂອງພຣະອົງ ຄືຜູ້ກວດຣາຊການແຜ່ນດິນ ເຈົ້າແຂວງ
ຮອງເຈົ້າແຂວງ ແລະຜູ້ປຶກສາໄດ້ຕົກລົງເຫັນດີກັນວ່າ ພຣະຣາຊາສົມຄວນຈະຊົງອອກຄຳສັ່ງວ່າ ໃນສາມສິບ
ວັນນີ້ບໍ່ໃຫ້ໃຜທູນຂໍສິ່ງນຶ່ງສິ່ງໃດຈາກພຣະຫລືຄົນໃດໆ ເວັ້ນໄວ້ແຕ່ທູນຂໍຈາກພຣະອົງ ຜູ້ໃດຝ່າຝືນຄຳສັ່ງນີ້ຈະ
ຕ້ອງຖືກໂຍນເຂົ້າໄປໃນຖ້ຳສິງ
8 ດັ່ງນັ້ນ ຂໍພຣະອົງຊົງອອກຄຳສັ່ງນີ້ແລະລົງພຣະນາມໄວ້ ເພື່ອຈະໄດ້ນຳອອກໃຊ້ບັງຄັບເປັນກົດຫມາຍເມ
ເດັຽແລະເປີເຊັຽ ຊຶ່ງເປັນກົດຫມາຍປ່ຽນແປງບໍ່ໄດ້”

9 ດ້ວຍເຫດນີ້ ກະສັດດາຣິອຸສຈຶ່ງຊົງລົງພຣະນາມໃນຫນັງສືຄຳສັ່ງ

**ດານີເອນໃນຖ້ຳຂອງສິງ**

Daniel in the Lion’ Den

10 ເມື່ອດານີເອນຮູ້ວ່າ ກະສັດຊົງລົງພຣະນາມໃນຫນັງສືຄຳສັ່ງນັ້ນແລ້ວ ທ່ານກໍໄປຍັງເຮືອນຂອງຕົນ ໃນເຮືອນ
ນັ້ນມີປ່ອງຢ້ຽມຊັ້ນເທິງສາມປ່ອງຢູ່ເຊິ່ງນະຄອນເຢຣູຊາເລັມ ຢູ່ທີ່ນັ້ນທ່ານຄຸເຂົ່າລົງຕໍ່ຫນ້າປ່ອງຢ້ຽມທີ່ໄຂໄວ້
ແລ້ວອ້ອນວອນຕໍ່ພຣະເຈົ້າມື້ລະສາມເທື່ອເຫມືອນເຄີຍປະຕິບັດມາ

11 ຄົນເຫລົ່ານີ້ກໍໄດ້ສັງເກດເຫັນດານີເອນ ອ້ອນວອນຕໍ່ພຣະເຈົ້າ

12 ພວກເຂົາທັງຫມົດຈຶ່ງພາກັນໄປຟ້ອງດານີເອນຕໍ່ພຣະຣາຊາ ທູນວ່າ, “ຂ້າແດ່ພຣະຣາຊາ ພຣະອົງໄດ້ຊົງລົງພ
ຣະນາມໃນຄຳສັ່ງທີ່ວ່າ ໃນສາມສິບມື້ຕໍ່ໄປນີ້ ຖ້າບຸກຄົນຜູ້ໃດທູນຂໍສິ່ງນຶ່ງສິ່ງໃດຈາກພຣະຫລືຄົນໃດໆຈະຕ້ອງ
ຖືກໂຍນເຂົ້າໄປໃນຖ້ຳສິງ ເວັ້ນໄວ້ແຕ່ທູນຂໍຈາກພຣະອົງ” ພຣະຣາຊາຊົງກ່າວຕອບວ່າ, “ແມ່ນແລ້ວ ເປັນຄຳ
ສັ່ງທີ່ເດັດຂາດຕາມກົດຫມາຍຂອງເມເດສແລະເປີເຊັຽ ຈະແກ້ໄຂປ່ຽນແປງບໍ່ໄດ້”

13 ແລ້ວພວກເຂົາໄດ້ກາບທູນອົງພຣະຣາຊາວ່າ, “ດານີເອນຜູ້ເປັນຊະເລີຍຄົນນຶ່ງທີ່ຖືກກວາດຕ້ອນມາຈາກຢູດາ
ເຂົາບໍ່ໄດ້ໂຄຣົບພຣະຣາຊາ ຫລືເຊື່ອຟັງຄຳສັ່ງທີ່ພຣະອົງຊົງປະກາດອອກໄປ ເຂົາໄດ້ອ້ອນວອນຕໍ່ພຣະເຈົ້າ
ຂອງເຂົາມື້ລະສາມເທື່ອເປັນປະຈຳ”

14 ເມື່ອພຣະຣາຊາຊົງຊາບດັ່ງນັ້ນ ພຣະອົງກໍຊົງເປັນທຸກໃນພຣະທັຍ ຈຶ່ງຊົງຄິດຫາຊ່ອງທາງຊ່ອຍເຫລືອດານີເອນ
ພຣະອົງຊົງພຍາຍາມຢູ່ຈົນຄ່ຳ

15 ແລ້ວຄົນເຫລົ່ານັ້ນກໍພາກັນກັບມາເຝົ້າພຣະຣາຊາແລະທູນວ່າ, “ພຣະຣາຊາຊົງຊາບແລ້ວວ່າ ຕາມກົດຫມາຍ
ຂອງເມເດັຽ ແລະເປີເຊັຽນັ້ນ ບໍ່ມີຄຳສັ່ງໃດທີ່ພຣະຣາຊາຊົງປະກາດອອກໄປແລ້ວຈະປ່ຽນແປງໄດ້”

16 ຕໍ່ມາ ພຣະຣາຊາຊົງອອກຄຳສັ່ງໃຫ້ເອົາດານີເອນໂຍນເຂົ້າໄປໃນຖ້ຳສິງ ພຣະອົງຊົງກ່າວຕໍ່ດານີເອນວ່າ, “ຂໍ
ພຣະເຈົ້າຂອງທ່ານ ຜູ້ທີ່ທ່ານໄດ້ຮັບໃຊ້ດ້ວຍຄວາມຈົ່ງຮັກພັກດີນັ້ນ ຈົ່ງຊ່ອຍເຫລືອທ່ານສາ”

17 ພວກເຂົາໄດ້ນຳກ້ອນຫີນມາອັດປາກຖ້ຳໄວ້ ພຣະຣາຊາໄດ້ຊົງປະທັບຕຣາຂອງພຣະອົງ ແລະຕຣາຂອງເຈົ້າ
ນາຍຊັ້ນສູງໃສ່ໃນກ້ອນຫີນ ເພື່ອບໍ່ໃຫ້ໃຜຊ່ອຍດານີເອນໄດ້

18 ແລ້ວພຣະອົງໄດ້ສະເດັດກັບຄືນພຣະຣາຊວັງ ໃນຄືນນັ້ນພຣະອົງບໍ່ໄດ້ສເວີຍອາຫານ ບໍ່ຍອມໃຫ້ມີການລິ້ນ
ເລີງມ່ວນຊື່ນ ແລະບັນທົມບໍ່ຫລັບຕລອດຄືນ

**ດານີເອນປອດພັຍຈາກສິງ**

Daniel Saved from the Lions

19 ພຣະຣາຊາຊົງຕື່ນຈາກບັນທົມແຕ່ເດິກ ແລະຟ້າວສະເດັດໄປຍັງຖ້ຳສິງ

20 ເມື່ອພຣະອົງຊົງສະເດັດເຂົ້າມາໃກ້ຖ້ຳ ກໍຊົງຮ້ອງສຽງດັງດ້ວຍຄວາມກະວົນກະວາຍວ່າ, “ດານີເອນຜູ້ຮັບໃຊ້
ຂອງພຣະເຈົ້າອົງຊົງພຣະຊົນຢູ່ເອີຍ ພຣະເຈົ້າອົງທີ່ທ່ານຮັບໃຊ້ດ້ວຍຄວາມຈົ່ງຮັກພັກດີ ໄດ້ຊ່ອຍທ່ານໃຫ້ພົ້ນ
ຈາກສິງບໍ່”

21 ດານີເອນໄດ້ທູນຕອບວ່າ, “ຂໍຈົ່ງຊົງພຣະຈະເຣີນເທີ້ນ

22 ພຣະເຈົ້າຊົງໃຊ້ເທວະດາຂອງພຣະອົງມາອັດປາກສິງໄວ້ ເພື່ອບໍ່ໃຫ້ມັນທຳຮ້າຍຂ້າພຣະອົງ ຂ້າແດ່ພຣະຣາຊາ
ພຣະເຈົ້າຊົງເຮັດດັ່ງນີ້ຍ້ອນພຣະອົງຊົງຊາບວ່າ ຂ້າພຣະອົງບໍ່ມີຄວາມຜິດຫຍັງເລີຍ ແລະຍ້ອນຂ້າພຣະອົງບໍ່ໄດ້
ເຮັດຜິດແນວໃດຕໍ່ພຣະຣາຊາ”

23 ພຣະຣາຊາໄດ້ຊົງຊົມຊື່ນຍິນດີທີ່ສຸດ ແລະມີຄຳສັ່ງໃຫ້ນຳດານີເອນຂຶ້ນມາຈາກຖ້ຳ ດັ່ງນັ້ນ ພວກເຂົາຈຶ່ງຊ່ອຍ
ກັນເອົາດານີເອນຂຶ້ນມາ ແລະບໍ່ປາກົດວ່າທ່ານໄດ້ຖືກທຳຮ້າຍເລີຍ ຍ້ອນວ່າທ່ານໄດ້ໄວ້ວາງໃຈໃນພຣະເຈົ້າ

24 ແລ້ວພຣະຣາຊາຊົງອອກຄຳສັ່ງໃຫ້ໂຍນຄົນທັງປວງທີ່ຟ້ອງດານີເອນລົງໄປໃນຖ້ຳສິງ ພ້ອມດ້ວຍລູກເມັຽທັງຫລາຍ ກ່ອນທີ່ພວກເຂົາຈະຕົກລົງເຖິງພື້ນຖ້ຳ ສິງກໍໂດດສວບກິນຈົນຫມົດສິ້ນ

25 ຕໍ່ມາ ກະສັດດາຣິອຸສຊົງມີພຣະຣາຊສານໄປເຖິງປະຊາຊົນທຸກປະເທດ ທຸກເຊື້ອຊາດແລະພາສາໃນໂລກວ່າ, "ຂໍຄວາມສຸກຄວາມຈະເຣີນຈົ່ງມີແກ່ທ່ານທັງຫລາຍ

26 ເຮົາຂໍສັ່ງວ່າ ໃຫ້ທຸກຄົນທົ່ວຣາຊອານາຈັກຂອງເຮົາ ຈົ່ງຢຳເກງແລະໂຄຣົບນັບຖືພຣະເຈົ້າຂອງດານີເອນ ພຣະອົງເປັນ ພຣະເຈົ້າຜູ້ຊົງພຣະຊົນຢູ່ ແລະຈະປົກຄອງຕລອດໄປ ຣາຊອານາຈັກຂອງພຣະອົງຈະບໍ່ຖືກທຳລາຍ ແລະພຣະຣາຊອຳນາດຂອງພຣະອົງຈະບໍ່ຫມົດສິ້ນຈັກເທື່ອ

27 ພຣະອົງຊົງຊ່ອຍຊີວິດໃຫ້ພົ້ນພັຍ ຊົງສະແດງຫມາຍສຳຄັນແລະການອັດສະຈັນໃນຟ້າສວັນແລະໃນແຜ່ນດິນ ພຣະອົງຊົງຊ່ອຍດານີເອນໃຫ້ພົ້ນຈາກແຂ້ວສິງ"

28 ດັ່ງນັ້ນ ດານີເອນກໍຈະເຣີນຮຸ່ງເຮືອງຢູ່ໃນຣາຊການຂອງກະສັດດາຣິອຸສ ແລະໃນຣາຊການຂອງກະສັດໄຊຣັສຄົນເປີເຊັຽ

## 7 ນິມິດເຣື່ອງສັດສີ່ຊະນິດ

Visions of the Four Beasts

1 ໃນປີທຳອິດແຫ່ງຣາຊການເບນຊັສຊາ ກະສັດບາບີໂລນ ຂ້າພະເຈົ້າດານີເອນໄດ້ຝັນເຫັນນິມິດໃນເວລາກາງຄືນ ແລ້ວໄດ້ບັນທຶກຄຳຝັນແລະສິ່ງທີ່ເຫັນໃນຄືນນັ້ນໄວ້ດັ່ງນີ້:

2 ດານີເອນກ່າວວ່າ, "ຂ້າພະເຈົ້າໄດ້ເຫັນນິມິດໃນເວລາກາງຄືນ ແລະເບິ່ງແມ, ມີລົມພັດມາຈາກທິດທັງສີ່ ມາຕີຫນ້ານ້ຳມະຫາສມຸດໃຫ້ເປັນຟອງ

3 ແລ້ວມີສັດໃຫຍ່ສີ່ໂຕຂຶ້ນມາຈາກມະຫາສມຸດ ສັດແຕ່ລະໂຕມີຮູບຮ່າງແຕກຕ່າງກັນ

4 ໂຕທຳອິດເບິ່ງຄ້າຍຄືສິງ ແລະມີປີກເຫມືອນນົກອິນຊີ ໃນຂນະທີ່ຂ້າພະເຈົ້າເຝົ້າເບິ່ງຢູ່ນັ້ນ ປີກຂອງມັນໄດ້ຖືກດຶງອອກ ສັດໂຕນັ້ນໄດ້ຖືກຍົກຂຶ້ນ ແລະໄດ້ຢືນຢູ່ເຫມືອນຄົນ ແລ້ວຈິດໃຈຂອງມະນຸດໄດ້ຖືກມອບໃຫ້ມັນ

5 ຂ້າພະເຈົ້າໄດ້ເຫັນສັດໂຕທີສອງ ມັນມີຮູບຮ່າງເຫມືອນຫມີທີ່ກຳລັງຢືນຢູ່ດ້ວຍຂາຫລັງຂອງມັນ ມີກະດູກຂ້າງສາມອັນຢູ່ໃນປາກຂອງມັນ ແລະມີສຽງບອກມັນວ່າ, "ຈົ່ງໄປກິນຊີ້ນໃຫ້ຫລາຍໆ"

6 ຂ້າພະເຈົ້າໄດ້ຫລຽວເບິ່ງຕໍ່ໄປ ແລະໄດ້ເຫັນສັດອີກໂຕນຶ່ງເຫມືອນເສືອດາວ ທາງຫລັງຂອງມັນມີປີກເຫມືອນປີກນົກ ມີຫົວສີ່ຫົວແລະມີອຳນາດຫລາຍ

7 ຂນະທີ່ຂ້າພະເຈົ້າກຳລັງເຝົ້າເບິ່ງຢູ່ນັ້ນ ກໍໄດ້ເຫັນສັດໂຕທີສີ່ ສັດໂຕນີ້ຫນ້າຢ້ານ ຮ້າຍກາດແລະແຂງແຮງທີ່ສຸດ ມັນມີແຂ້ວເຫລັກຂນາດໃຫຍ່ ກິນແລະທຳລາຍທຸກໆສິ່ງ ມັນມີສິບເຂົາແລະບໍ່ເຫມືອນກັບສັດໂຕອື່ນໆ

8 ຂນະທີ່ຊອມເບິ່ງເຂົາເຫລົ່ານັ້ນ ມັນໄດ້ເຮັດໃຫ້ສາມເຂົາທຳອິດຫລ່ອນອອກ ເຂົາອັນນີ້ມີຕາແລະປາກເຫມືອນມະນຸດ ປາກຂອງມັນຄຸຍອວດເຣື່ອງໃຫຍ່ໂຕ

**ດານີເອນເຫັນນິມິດກ່ຽວກັບພຣະເຈົ້າອົງຊົງພຣະຊົນຢູ່**

9 ຂນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ໄດ້ມີບັນລັງຫລາຍອັນຖືກນຳມາຕັ້ງໄວ້ເທິງບັນລັງແຕ່ລະອັນ ມີອົງຜູ້ຊົງພຣະຊົນຢູ່ເປັນນິດປະທັບຢູ່ ເຄື່ອງສລອງຂອງພຣະອົງຂາວເຫມືອນນວນຝ້າຍ ຜົມເຫມືອນຂົນແກະບໍຣິສຸດ ພຣະບັນລັງຂອງພຣະອົງເປັນແປວໄຟ ກົງຈັກຂອງບັນລັງນັ້ນເປັນໄຟລຸກຢູ່ ແລະແປວໄຟໄດ້ພຸ່ງອອກຈາກທີ່ນັ້ນ

10 ມີຄົນເປັນຈຳນວນລ້ານບົວຣະບັດພຣະອົງຢູ່ທີ່ນັ້ນ ແລະມີຄົນເປັນໂກດໆຢືນຢູ່ຊ້ອງພຣະພັກຂອງພຣະອົງ ພວກຜູ້ພິພາກສາກໍເລີ້ມພິພາກສາ ແລະເປີດຫນັງສືອອກມາອ່ານ

11 ຂນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ກໍໄດ້ຍິນສຽງເຂົານ້ອຍນັ້ນເວົ້າໂອ້ອວດຂຶ້ນ ແລະສັດໂຕທີສີ່ໄດ້ຖືກຂ້າ ຊາກສົບຂອງມັນຖືກໂຍນໃສ່ໄຟເພື່ອທຳລາຍຖິ້ມ

12 ສ່ວນສັດໂຕອື່ນນັ້ນໄດ້ຖືກຖອດອຳນາດ ແຕ່ອະນຸຍາດໃຫ້ມັນມີຊີວິດຢູ່ຕໍ່ໄປໄດ້ຊົ່ວລະຍະນຶ່ງ
13 ລະຫວ່າງເກີດນິມິດນີ້ໃນເວລາກາງຄືນ ຂ້າພະເຈົ້າໄດ້ເຫັນຜູ້ນຶ່ງມີຮູບຮ່າງເຫມືອນມະນຸດ ທ່ານໄດ້ເຂົ້າມາໃກ້ໆ
ອ້ອມຮອບດ້ວຍເມກ ແລະໄດ້ເຂົ້າເຝົ້າພຣະຜູ້ຊົງພຣະຊົນຢູ່ເປັນນິດ
14 ຢູ່ທີ່ນັ້ນ ທ່ານໄດ້ຮັບອຳນາດກຽດຕິຍົດແລະເດຊານຸພາບ ເພື່ອປະຊາຊົນທຸກປະເທດ ທຸກເຊື້ອຊາດ ແລະພາສາ
ຈະຮັບໃຊ້ທ່ານ ເດຊານຸພາບຂອງທ່ານຈະມີຢູ່ຕລອດໄປ ແລະຣາຊອານາຈັກກໍຈະບໍ່ມີເວລາສິ້ນສຸດລົງ

**ການແກ້ນິມິດ**

Daniel's Visions Interpreted

15 ນິມິດທີ່ຂ້າພະເຈົ້າເຫັນນັ້ນ ໄດ້ເຮັດໃຫ້ຂ້າພະເຈົ້າຕື່ນຕົກໃຈແລະເປັນທຸກຢ່າງໃຫຍ່ຫລວງ
16 ຂ້າພະເຈົ້າຈຶ່ງຂຶ້ນໄປຫາທ່ານຜູ້ນຶ່ງທີ່ຢືນຢູ່ທີ່ນັ້ນ ເພື່ອຂໍຮ້ອງໃຫ້ທ່ານອະທິບາຍເຣື່ອງທັງຫມົດນີ້ ທ່ານຈຶ່ງບອກ
ຄວາມຫມາຍແກ່ຂ້າພະເຈົ້າວ່າ,
17 “ສັດໃຫຍ່ທັງສີ່ໂຕນັ້ນ ແມ່ນຣາຊອານາຈັກທັງສີ່ຈະເກີດຂຶ້ນໃນໂລກ
18 ໄພ່ພົນຂອງພຣະເຈົ້າອົງສູງສຸດຈະໄດ້ຮັບພຣະຣາຊອຳນາດແລະຈະໄດ້ຄອບຄອງຣາຊອານາຈັກນັ້ນຕລອດໄປ
ເປັນນິດ”
19 ແລ້ວຂ້າພະເຈົ້າໄດ້ສົນໃຈຢາກຮູ້ເຣື່ອງກ່ຽວກັບສັດໂຕທີສີ່ ຊຶ່ງບໍ່ເຫມືອນກັບສັດຕົວອື່ນໆ ມັນເປັນສັດຫນ້າຢ້ານ
ທີ່ສຸດ ມີແຂ້ວເຫລັກແລະເລັບຕີນທອງສຳລິດ ມັນກິນແລະທຳລາຍທຸກສິ່ງ
20 ຂ້າພະເຈົ້າໄດ້ສົນໃຈຢາກຮູ້ເຣື່ອງກ່ຽວກັບເຂົາສິບເຂົາຢູ່ເທິງຫົວຂອງມັນ ຄືມີເຂົາອັນນຶ່ງທີ່ປົ່ງຊອນອອກມາ
ຕາມຫລັງ ໄດ້ເຮັດໃຫ້ເຂົາສາມເຂົາຫລ່ອນອອກ ເຂົານີ້ມີຕາແລະປາກທີ່ຄຸຍອວດເຣື່ອງໃຫຍ່ໂຕ ມັນຫນ້າເກງ
ຂາມກວ່າເຂົາອື່ນໆ
21 ຂນະທີ່ຂ້າພະເຈົ້າກຳລັງຫລຽວເບິ່ງ ເຂົາອັນນັ້ນໄດ້ຮົບຊະນະໄພ່ພົນຂອງພຣະເຈົ້າ
22 ແລ້ວອົງຜູ້ຊົງພຣະຊົນຢູ່ເປັນນິດໄດ້ມາຕັດສິນເຂົ້າຂ້າງໄພ່ພົນຂອງພຣະເຈົ້າອົງສູງສຸດ ໄພ່ພົນຂອງພຣະເຈົ້າຈຶ່ງ
ໄດ້ຮັບພຣະຣາຊອຳນາດ
23 ຕໍ່ໄປນີ້ແມ່ນຄຳແກ້ຄວາມຝັນທີ່ຂ້າພະເຈົ້າໄດ້ຮັບ ຄືສັດໂຕທີສີ່ແມ່ນຣາຊອານາຈັກອັນທີສີ່ຈະເກີດຂຶ້ນໃນໂລກ
ຈະແຕກຕ່າງຈາກຣາຊອານາຈັກອື່ນໆທັງປວງ ມັນຈະກືນກິນໂລກທັງຫມົດ ຈະທຳລາຍແລະກຳຈັດເສັຽໃຫ້
ຫມົດ
24 ເຂົາສິບເຂົານັ້ນແມ່ນກະສັດສິບອົງ ຊຶ່ງຈະເກີດຂຶ້ນໃນຣາຊອານາຈັກນັ້ນ ແລ້ວຈະມີກະສັດອີກອົງນຶ່ງເກີດຂຶ້ນ
ກະສັດອົງນີ້ຈະແຕກຕ່າງຈາກກະສັດອົງກ່ອນໆ ແລະຈະໂຄ່ນລົ້ມກະສັດສາມອົງເສັຽ
25 ທ່ານຈະເວົ້າຕໍ່ສູ້ພຣະເຈົ້າອົງສູງສຸດ ຈະກົດຂີ່ໄພ່ພົນຂອງພຣະອົງ ຈະພຍາຍາມປ່ຽນແປງພຣະບັນຍັດແລະພິທີ
ທາງສາສນາຂອງພວກເຂົາ ໄພ່ພົນຂອງພຣະເຈົ້າຈະຢູ່ໃຕ້ອຳນາດຂອງທ່ານ ຕລອດນຶ່ງວາຣະ ສອງວາຣະ ກັບ
ເຄິ່ງວາຣະ
26 ແລ້ວສານກໍຈະເລີ້ມພິພາກສາ ຈະຕັດສິນຖອດຖອນພຣະຣາຊອຳນາດແລະທຳລາຍທ່ານຈົນຫມົດສິ້ນ
27 ອຳນາດແລະຄວາມຍິ່ງໃຫຍ່ແຫ່ງພຣະຣາຊອານາຈັກທັງປວງໃນໂລກ ຈະຖືກມອບໃຫ້ແກ່ໄພ່ພົນຂອງພຣະ
ເຈົ້າອົງສູງສຸດ ພຣະຣາຊອຳນາດຂອງພວກເຂົານັ້ນຈະບໍ່ຫມົດສິ້ນໄປ ຜູ້ປົກຄອງທັງປວງໃນໂລກຈະຮັບໃຊ້
ແລະເຊື່ອຟັງພວກເຂົາ
28 ເຣື່ອງຣາວໄດ້ສິ້ນສຸດລົງພຽງເທົ່ານີ້ ຂ້າພະເຈົ້າດານີເອນໄດ້ຕົກໃຈຫລາຍຈົນຫນ້າຂາວຊີດໄປ ແຕ່ກໍຍັງສາມາດ
ຈື່ຈຳເຣື່ອງຣາວທັງຫມົດນີ້ໄວ້ໄດ້

## 8 ນິມິດເຣື່ອງແກະແລະແບ້

Vision of a Ram and a Goat

1 ໃນປີທີສາມແຫ່ງຣາຊການກະສັດເບນຊັສຊານັ້ນ ຂ້າພະເຈົ້າດານີເອນໄດ້ເຫັນນິມິດເປັນເທື່ອທີສອງ

2 ໃນນິມິດນັ້ນ ຂ້າພະເຈົ້າເຫັນວ່າຕົວເອງຢູ່ທີ່ນະຄອນຊູຊາ ຊຶ່ງຢູ່ໃນແຂວງເມືອງເອລາມ ແລະຂ້າພະເຈົ້າໄດ້ຢືນຢູ່ໃກ້ແມ່ນໍ້າອູລັຍ

3 ຂ້າພະເຈົ້າໄດ້ເງີຍຫນ້າຂຶ້ນເຫັນແກະເຖິກຕົວນຶ່ງຢືນຢູ່ແຄມແມ່ນໍ້ານັ້ນ ມັນມີເຂົາໃຫຍ່ສອງເຂົາ ເຂົາທີ່ປົ່ງອອກມາພາຍຫລັງໃຫຍ່ກວ່າເຂົາທຳອິດ

4 ຂ້າພະເຈົ້າໄດ້ຊອມເບິ່ງແກະນັ້ນຊົນແກະຕົວທີ່ຢູ່ທາງຕາເວັນຕົກ ທາງເຫນືອແລະທາງໃຕ້ ບໍ່ມີສັດຕົວໃດຕ້ານທານຫລືຫນີລອດຈາກອຳນາດຂອງມັນໄດ້ ມັນເຮັດຕາມໃຈແລະມັກໃຫຍ່ໃຝ່ສູງ

5 ຂນະທີ່ຂ້າພະເຈົ້າພວມຄຶດສົງສັຍໃນສິ່ງນີ້ຢູ່ນັ້ນ ໄດ້ມີແບ້ຕົວນຶ່ງແລ່ນມາຈາກທາງຕາເວັນຕົກດ້ວຍຄວາມໄວເກືອບຕີນບໍ່ຕິດດິນ ມັນມີເຂົາສຳຄັນເຂົານຶ່ງຢູ່ລະຫວ່າງຕາສອງເບື້ອງ

6 ເມື່ອມັນມາເຖິງແກະຕົວທີ່ມີເຂົາສອງເຂົາຊຶ່ງຂ້າພະເຈົ້າໄດ້ເຫັນມັນຢືນຢູ່ແຄມແມ່ນໍ້ານັ້ນ ມັນໄດ້ແລ່ນເຂົ້າຊົນແກະຕົວນັ້ນຫມົດແຮງຂອງມັນ

7 ຂ້າພະເຈົ້າໄດ້ຊອມເບິ່ງມັນຊົນແກະຕົວນີ້ຢູ່ ມັນຕໍ່ສູ້ດ້ວຍຄວາມຄຽດຮ້າຍຫລາຍ ຈົນເຂົາສອງເຂົາຂອງມັນຫັກໄປ ຝ່າຍແກະບໍ່ມີແຮງຕ້ານທານມັນໄດ້ ຈຶ່ງຖືກແບ້ຊົດລົ້ມລົງດິນແລະຂຶ້ນຢຽບ ບໍ່ມີໃຜຊ່ອຍແກະໃຫ້ພົ້ນຈາກຄວາມຕາຍໄດ້

8 ຝ່າຍແບ້ມີຄວາມເຍີ່ຍິ່ງຈອງຫອງຫລາຍ ແຕ່ໃນເວລາທີ່ມັນແຂງແຮງຫລາຍນັ້ນ ເຂົາຂອງມັນໄດ້ຫັກອອກ ແຕ່ມີເຂົາທີ່ສຳຄັນສີ່ເຂົາໄດ້ປົ່ງອອກມາແທນອີກ ເຂົາເຫລົ່ານີ້ໄດ້ຊີ້ໄປຕ່າງທິດທາງກັນ

9 ມີເຂົານ້ອຍອັນນຶ່ງປົ່ງອອກມາຈາກເຂົາອັນນຶ່ງໃນສີ່ເຂົານີ້ ມັນໄດ້ສະແດງອຳນາດຂອງມັນໄປໃນທາງທິດໃຕ້ທິດຕາເວັນອອກ ແລະໄປຍັງແຜ່ນດິນທີ່ຊົງສັນຍາໄວ້

10 ມັນແຂງແຮງພໍທີ່ຈະໂຈມຕີກອງທັບດວງດາວເທິງຟ້າສວັນ ມັນໄດ້ໂຍນດວງດາວບາງກຸ່ມເຫລົ່ານັ້ນລົງມາຍັງດິນແລ້ວຢຽບຖິ້ມ

11 ມັນຂັດຂືນກອງທັບແຫ່ງຟ້າສວັນ ໂດຍຫ້າມປາມບໍ່ໃຫ້ໃຜຂາບໄຫວ້ນະມັສການພຣະອົງຢູ່ໃນພຣະວິຫານ

12 ດັ່ງນັ້ນ ຈຶ່ງມີການເຮັດບາບແທນການເຜົາບູຊາປະຈຳວັນ ແລະປະຖິ້ມຄວາມຈິງ ເຂົາອັນນີ້ໄດ້ກະທຳທຸກໆສິ່ງເປັນຜົນສຳເຣັດ

13 ແລ້ວຂ້າພະເຈົ້າໄດ້ຍິນເທວະດາສອງຕົນຖາມກັນວ່າ, “ຍັງອີກເທິງປານໃດ ສິ່ງທີ່ເກີດຂຶ້ນໃນນິມິດນີ້ຈຶ່ງຈະຫມົດໄປ ຄືການເຮັດບາບອັນຊົ່ວຮ້າຍແທນການເຜົາບູຊາປະຈຳວັນ ກັບກອງທັບສວັນແລະພຣະວິຫານຖືກທຳລາຍນັ້ນ”

14 ເທວະດາຕົນນຶ່ງໄດ້ຕອບວ່າ, “ຍັງເທິງເທົ່າກັບເວລາເຜົາບູຊາທັງເຊົ້າແລະແລງຜ່ານໄປໄດ້ສອງພັນສາມຮ້ອຍເທື່ອ ແລ້ວ  ພຣະວິຫານຈະຄືນສູ່ສະພາບເດີມ”

**ເທວະດາຄັບຣີເອນອະທິບາຍເຣື່ອງນິມິດ**

Gabriel Interprets the Vision

15 ຂ້າພະເຈົ້າດານີເອນ ເມື່ອໄດ້ເຫັນນິມິດນັ້ນກໍພຍາຍາມໃຫ້ເຂົ້າໃຈ ແຕ່ທັນໃດນັ້ນມີເທວະດາຕົນນຶ່ງຊຶ່ງມີຮູບຮ່າງເຫມືອນມະນຸດຢືນຢູ່ຕໍ່ຫນ້າຂ້າພະເຈົ້າ

16 ຂ້າພະເຈົ້າໄດ້ຍິນສຽງຄົນຮ້ອງມາແຕ່ແມ່ນໍ້າອູລັຍວ່າ, “ຄັບຣີເອນເອີຍ, ຈົ່ງອະທິບາຍຄວາມຫມາຍສິ່ງທີ່ເຂົາເຫັນນັ້ນໃຫ້ ເຂົາຮູ້ແດ່”

17 ຄັບຣີເອນໄດ້ມາຢືນຢູ່ຂ້າງຂ້າພະເຈົ້າ ຂ້າພະເຈົ້າຕົກໃຈຫລາຍຈົນລົ້ມລົງດິນ ເທວະດາໄດ້ເວົ້າກັບຂ້າພະເຈົ້າວ່າ, “ມະນຸດເອີຍ ຈົ່ງເຂົ້າໃຈຄວາມຫມາຍເດີ ຄືນິມິດທີ່ເຈົ້າເຫັນນັ້ນເປັນຈຸດຊີ້ບອກເວລາອະວະສານ”

18 ຂນະທີ່ເທວະດາກຳລັງເວົ້າຢູ່ ຂ້າພະເຈົ້າໄດ້ໝົດສະຕິແລະລົ້ມສລົບລົງຢູ່ທີ່ນັ້ນ
19 ເທວະດາໄດ້ໂຊມຂ້າພະເຈົ້າຂຶ້ນ ແລ້ວເວົ້າວ່າ, “ຂ້າພະເຈົ້າຈະສະແດງໃຫ້ທ່ານເຫັນຜົນແຫ່ງຄວາມຄຽດ
ຮ້າຍຂອງພຣະເຈົ້າ ນິມິດນັ້ນກ່ຽວກັບເຣື່ອງເວລາສຸດທ້າຍ
20 ແກະທີ່ມີເຂົາສອງເຂົາທີ່ທ່ານເຫັນນັ້ນ ສະແດງເຖິງຣາຊອານາຈັກເມເດັຽ ແລະເປີເຊັຽ
21 ແບ້ແມ່ນຣາຊອານາຈັກກຣີກ ແລະເຂົາສຳຄັນຢູ່ລະຫວ່າງຕາຂອງມັນແມ່ນກະສັດອົງທຳອິດ
22 ເຂົາສີ່ເຂົາທີ່ປົ່ງອອກມາແທນເຂົາທຳອິດທີ່ຫັກອອກນັ້ນ ແມ່ນຣາຊອານາຈັກທັງສີ່ທີ່ຈະເກີດຂຶ້ນຈາກຊົນຊາດ
ນັ້ນ ແຕ່ຈະບໍ່ເຂັ້ມແຂງເຫມືອນຣາຊອານາຈັກທຳອິດ
23 ເມື່ອຣາຊອານາຈັກເຫລົ່ານີ້ໃກ້ຈະສິ້ນສຸດລົງ ຄວາມຊົ່ວຮ້າຍຈະມີຫລາຍທີ່ສຸດໃນຣາຊອານາຈັກນີ້ ແລ້ວຈະມີ
ກະສັດຫົວດື້ ໂຫດຮ້າຍ ແລະສໍ້ໂກງອົງນຶ່ງເກີດຂຶ້ນ
24 ກະສັດອົງນີ້ຈະເຂັ້ມແຂງຂຶ້ນ ແຕ່ບໍ່ແມ່ນດ້ວຍອຳນາດຂອງພຣະອົງເອງ ພຣະອົງຈະເຮັດໃຫ້ເກີດຄວາມພິນາດ
ຢ່າງຫນ້າຢ້ານ ຈະເຮັດທຸກສິ່ງໃຫ້ສຳເຣັດ ຈະທຳລາຍຄົນຜູ້ມີອຳນາດແລະໄພ່ພົນຂອງພຣະເຈົ້າ
25 ຍ້ອນວ່າພຣະອົງມີຄວາມສລາດ ຈຶ່ງສໍ້ໂກງສຳເຣັດແລະທະເຍີທະຍານ ປະຊາຊົນຈຳນວນຫລາຍຈະຖືກທຳ
ລາຍໂດຍບໍ່ທັນຮູ້ຕົວ ແມ່ນແຕ່ມະຫາກະສັດອົງຍິ່ງໃຫຍ່ພຣະອົງກໍຈະບໍ່ຢ້ານ ແຕ່ພາຍຫລັງພຣະອົງເອງຈະຖືກ
ທຳລາຍດ້ວຍອຳນາດທີ່ບໍ່ແມ່ນມາຈາກມະນຸດ
26 ນິມິດແຫ່ງການຖວາຍບູຊາທັງເຊົ້າແລະແລງ ຊຶ່ງໄດ້ອະທິບາຍຕໍ່ທ່ານນີ້ເປັນຄວາມຈິງ ທ່ານຈົ່ງຮັກສາໄວ້ເປັນ
ຄວາມລັບ ເພາະເວລາທີ່ນິມິດນີ້ຈະເປັນຈິງຂຶ້ນມາກໍຍັງຢູ່ເຫິງນານ”
27 ຂ້າພະເຈົ້າດານີເອນໄດ້ອ່ອນແຮງແລະເຈັບປ່ວຍຢູ່ເປັນເວລາຫລາຍມື້ ຈຶ່ງສາມາດລຸກໄປປະຕິບັດພາຣະກິດທີ່
ພຣະຣາຊາຊົງມອບຫມາຍໃຫ້ໄດ້ ຂ້າພະເຈົ້າຈຶ່ງງຶດງໍ້ແລະບໍ່ເຂົ້າໃຈນິມິດນັ້ນເລີຍ

## 9 ດານີເອນອ້ອນວອນເພື່ອຊົນຊາດ

Daniel’s Prayer for the People

1 ດາຣິອຸສຣາຊໂອຣົດຂອງກະສັດອາຮາຊູເອຣູສ ຜູ້ຊຶ່ງເປັນຄົນເຊື້ອສາຍເມເດັຽໄດ້ປົກຄອງຣາຊອານາຈັກບາບີ
ໂລນ
2 ໃນປີທຳອິດທີ່ພຣະອົງຊົງເປັນກະສັດນັ້ນ ຂ້າພະເຈົ້າດານີເອນໄດ້ຮໍ່າຮຽນພຣະຄັມພີ ແລະຄິດເຖິງເຣື່ອງເຈັດ
ສິບປີທີ່ນະຄອນເຢຣູຊາເລັມຈະຖືກທຳລາຍຕາມພຣະຜູ້ເປັນເຈົ້າຊົງບອກເຢເຣມີຢາຜູ້ປະກາດພຣະທັມໄວ້
3 ຂ້າພະເຈົ້າໄດ້ອ້ອນວອນດ້ວຍໃຈຮ້ອນຮົນຕໍ່ພຣະຜູ້ເປັນເຈົ້າໄດ້ຮ້ອງຂໍຕໍ່ພຣະອົງ ໄດ້ອົດອາຫານ ໄດ້ນຸ່ງ
ເຄື່ອງໄວ້ທຸກແລະນັ່ງໃນຂີ້ເຖົ່າໄຟ
4 ຂ້າພະເຈົ້າໄດ້ອ້ອນວອນຕໍ່ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ແລະຍອມຮັບສາຣະພາບສິ່ງທີ່ຊົນຊາດຂອງຂ້າພະ
ເຈົ້າໄດ້ເຮັດບາບວ່າ, “ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຍິ່ງໃຫຍ່ແລະຫນ້າຢຳເກງ ຊົງເຮັດຕາມຄຳຫມັ້ນສັນ
ຍາຂອງພຣະອົງ ຊົງສະແດງຄວາມຮັກຫມັ້ນຄົງຕໍ່ຄົນທັງຫລາຍທີ່ຈົງຮັກພັກດີຕໍ່ພຣະອົງ ແລະທີ່ປະຕິບັດຕາມ
ຄຳສັ່ງຂອງພຣະອົງ
5 ພວກຂ້າພຣະອົງໄດ້ເຮັດບາບ ໄດ້ເຮັດຊົ່ວແລະເຮັດຜິດ ບໍ່ເຮັດສິ່ງທີ່ພຣະອົງຊົງສັ່ງໃຫ້ເຮັດ ແລະໄດ້ປະຕິເສດ
ສິ່ງທີ່ພຣະອົງຊົງບອກວ່າຖືກຕ້ອງ
6 ພວກຂ້າພຣະອົງບໍ່ເຄີຍເຊື່ອຟັງພວກຜູ້ປະກາດພຣະທັມຂອງພຣະອົງ ຜູ້ຮັບໃຊ້ຂອງພຣະອົງຜູ້ເວົ້າໃນພຣະ
ນາມຂອງພຣະອົງຕໍ່ກະສັດ ຕໍ່ຜູ້ປົກຄອງ ແລະບັນພະບຸຣຸດຂອງພວກຂ້າພຣະອົງ ແລະຕໍ່ຊົນຊາດທັງຫມົດ

7 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຊອບທັມສເມີ ຂ້າພຣະອົງທັງຫລາຍ ພ້ອມທັງປະຊາຊົນຜູ້ຢູ່ໃນແຂວງຢູດາ
ໃນນະຄອນເຢຣູຊາເລັມ ແລະຊາວອິສຣາເອນທີ່ພຣະອົງຊົງເຮັດໃຫ້ເຂົາແຕກໄປຢູ່ໃນປະເທດໃກ້ແລະໄກ
ຍ້ອນພວກເຂົາບໍ່ເຊື່ອຟັງພຣະອົງນັ້ນໄດ້ກະທຳສິ່ງທີ່ຫນ້າອັບອາຍສເມີ
8 ຂ້າແດ່ພຣະຜູ້ເປັນເຈົ້າ ພວກກະສັດ ພວກຜູ້ປົກຄອງ ແລະບັນພະບຸຣຸດຂອງພວກຂ້າພຣະອົງໄດ້ກະທຳສິ່ງທີ່
ຫນ້າອັບອາຍແລະສິ່ງທີ່ເປັນບາບຕໍ່ ສູ້ພຣະອົງ
9 ພຣະອົງຊົງເມດຕາແລະຊົງໃຫ້ອະພັຍ ແຕ່ພວກຂ້າພຣະອົງໄດ້ກະບົດຕໍ່ສູ້ພຣະອົງ
10 ຂ້າແດ່ພຣະຜູ້ເປັນເຈົ້າ ເມື່ອພຣະອົງຊົງບອກໃຫ້ພວກຂ້າພຣະອົງເຮັດຕາມພຣະບັນຍັດ ໂດຍຊົງບອກຜ່ານ
ທາງພວກຜູ້ປະກາດພຣະທັມນັ້ນ ພວກຂ້າພຣະອົງກໍບໍ່ໄດ້ເຊື່ອຟັງພຣະອົງ
11 ຊາວອິສຣາເອນທັງປວງໄດ້ເຮັດຜິດພຣະບັນຍັດຂອງພຣະອົງ ແລະບໍ່ຍອມຟັງສິ່ງທີ່ພຣະອົງຊົງບອກ ພວກຂ້າ
ພຣະອົງໄດ້ເຮັດບາບຕໍ່ສູ້ພຣະອົງ
ພຣະອົງໄດ້ຊົງນຳເອົາຄຳປ້ອຍດ່າທີ່ຂຽນໄວ້ໃນບັນຍັດຂອງໂມເຊ ຜູ້ຮັບໃຊ້ຂອງພຣະອົງມາລົງໂທດພວກຂ້າພ
ຣະອົງ
12 ຊົງເຮັດຕໍ່ພວກຂ້າພຣະອົງແລະພວກຜູ້ປົກຄອງຕາມທີ່ພຣະອົງຊົງກ່າວໄວ້ ຊົງລົງໂທດນະຄອນເຢຣູຊາເລັມ
ແຮງກວ່ານະຄອນອື່ນໆໃນໂລກ
13 ພວກຂ້າພຣະອົງໄດ້ຮັບໂທດທຸກຢ່າງຕາມທີ່ກ່າວໄວ້ໃນບັນຍັດຂອງໂມເຊ ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກ
ຂ້າພຣະອົງ ແຕ່ຈົນດຽວນີ້ພວກຂ້າພຣະອົງກໍຍັງບໍ່ໄດ້ເຮັດໃຫ້ພຣະອົງຊົງພໍພຣະທັຍ ຄືຍັງເຮັດບາບ ຫລືປະພຶດ
ບໍ່ສັດຊື່ຢູ່
14 ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ ພຣະອົງໄດ້ຊົງຈັດຕຽມການລົງໂທດພວກຂ້າພຣະອົງ ແລະໄດ້ຊົງ
ກະທຳການນັ້ນແລ້ວ ເພາະວ່າທຸກໆສິ່ງທີ່ພຣະອົງໄດ້ຊົງກະທຳລ້ວນແຕ່ຖືກຕ້ອງ ແຕ່ພວກຂ້າພຣະອົງບໍ່ໄດ້ເຊື່ອ
ຟັງພຣະອົງ
15 ຂ້າແດ່ພຣະຜູ້ເປັນເຈົ້າຂອງພວກຂ້າພຣະອົງ ພຣະອົງຊົງສະແດງຣິດອຳນາດ ໂດຍສາມາດນຳເອົາໄພ່ພົນຂອງ
ພຣະອົງອອກມາຈາກປະເທດເອຢິບ ພວກຂ້າພຣະອົງຍັງຈື່ຈຳຣິດອຳນາດຂອງພຣະອົງຢູ່ ແຕ່ປານນັ້ນພວກຂ້າ
ພຣະອົງກໍຍັງເຮັດບາບແລະເຮັດຜິດຢູ່
16 ພຣະອົງໄດ້ຊົງເຮັດການອັນຊອບທັມມາແລ້ວ ດັ່ງນັ້ນຂໍຢ່າຊົງຄຽດຮ້າຍນະຄອນເຢຣູຊາເລັມອີກຕໍ່ໄປທ້ອນ
ເພາະວ່າມັນ ເປັນນະຄອນແລະເປັນພູສັກສິດຂອງພຣະອົງ ປະເທດເພື່ອນບ້ານທັງປວງຕ່າງກໍດູຫມິ່ນຢຽບ
ຫຍາມນະຄອນເຢຣູຊາເລັມແລະໄພ່ພົນຂອງພຣະອົງ ຍ້ອນວ່າພວກຂ້າພຣະອົງໄດ້ເຮັດບາບ ແລະຍ້ອນການ
ເຮັດຊົ່ວຂອງພວກບັນພະບຸຣຸດນັ້ນ
17 ຂ້າແດ່ພຣະຜູ້ເປັນເຈົ້າຕໍ່ໄປນີ້ຂໍຊົງໂຜດຮັບຟັງຄຳອ້ອນວອນ ຍອມສາລະພາບຜິດຂອງຂ້າພຣະເອົງແດ່ທ້ອນ ຂໍ
ຊົງໂຜດໃຫ້ພຣະວິຫານຂອງພຣະອົງທີ່ຖືກທຳລາຍນັ້ນກັບຄືນເປັນຄືເກົ່າ ເພື່ອທຸກໆຄົນຈະໄດ້ຮູ້ວ່າພຣະອົງຊົງ
ເປັນພຣະເຈົ້າ
18 ຂ້າແດ່ພຣະເຈົ້າ ຂໍຊົງຮັບຟັງສຽງພວກຂ້າພຣະອົງແດ່ທ້ອນ ຈົ່ງດູແລ ແລະທອດພຣະເນດເບິ່ງຄວາມທຸກຍາກທີ່
ພວກຂ້າ ພຣະອົງປະສົບຢູ່ ພ້ອມທັງຄວາມທຸກຍາກໃນນະຄອນຂອງພຣະອົງ ພວກຂ້າພຣະອົງອ້ອນວອນພ
ຣະອົງ ຍ້ອນວ່າພຣະອົງຊົງພຣະເມດຕາ ບໍ່ແມ່ນຍ້ອນພວກຂ້າພຣະອົງເປັນຄົນຊອບທັມ ຂ້າແດ່ພຣະຜູ້ເປັນ
ເຈົ້າຂໍຊົງຮັບຟັງພວກຂ້າພຣະອົງແດ່ທ້ອນ
19 ໂອ ພຣະຜູ້ເປັນເຈົ້າຂໍຊົງຍົກໂທດໃຫ້ພວກຂ້າພຣະອົງແດ່ທ້ອນ ຂໍຊົງຮັບຟັງພວກຂ້າພຣະອົງແລ້ວຊົງຮີບກະທຳ
ເພື່ອໃຫ້ທຸກໆຄົນຮູ້ຈັກວ່າພຣະອົງຊົງເປັນພຣະເຈົ້າ ຂໍຢ່າຊົງລ້າຊ້າຢູ່ ເພາະວ່ານະຄອນແລະປະຊາຊົນນີ້ເປັນ
ຂອງພຣະອົງ

### ຄັບຣິເອນອະທິບາຍຄຳເວົ້າຂອງຜູ້ປະກາດພຣະທັມ

The Seventy Weeks

20 ຂ້າພະເຈົ້າໄດ້ອ້ອນວອນ ແລະສາລະພາບບາບຂອງຂ້າພະເຈົ້າພ້ອມທັງບາບຂອງອິສຣາເອນຊົນຊາດຂອງຂ້າ
ພະເຈົ້າຕໍ່ໄປ ແລະໄດ້ຮ້ອງຂໍໃຫ້ພຣະຜູ້ເປັນເຈົ້າຂອງຂ້າພະເຈົ້າ ຊົງເຮັດໃຫ້ພຣະວິຫານອັນສັກສິດຂອງພຣະ
ອົງກັບຄືນເປັນຄືເກົ່າ

21 ເມື່ອຂ້າພະເຈົ້າອ້ອນວອນຢູ່ມີເທວະດາຕົນນຶ່ງຊື່ຄັບຣິເອນ ຄືຕົນທີ່ຂ້າພະເຈົ້າໄດ້ເຫັນໃນນິມິດ ເທື່ອທຳອິດນັ້ນ
ໄດ້ເຫາະລົງມາຍັງບ່ອນຂ້າພະເຈົ້າຢູ່ໃນເວລາຖວາຍເຄື່ອງບູຊາຕອນຄ່ຳ

22 ທ່ານໄດ້ອະທິບາຍວ່າ, "ດານີເອນເອີຍ, ເຮົາໄດ້ມາທີ່ນີ້ເພື່ອຊ່ອຍໃຫ້ເຈົ້າເຂົ້າໃຈຄຳເວົ້າຂອງຜູ້ປະກາດພຣະ
ທັມ

23 ຄືເມື່ອເຈົ້າເລີ່ມຕົ້ນຮ້ອງຂໍຕໍ່ພຣະເຈົ້າ ພຣະອົງກໍຊົງຕອບເຈົ້າ ເຮົາຈຶ່ງມາອະທິບາຍຄຳຕອບນັ້ນໃຫ້ເຈົ້າຮູ້ ເພາະ
ວ່າພຣະເຈົ້າຊົງຮັກເຈົ້າ ບັດນີ້ເຮົາຈະອະທິບາຍນິມິດນັ້ນ ຈົ່ງຕັ້ງໃຈຟັງໃຫ້ດີ

24 ມີເຈັດສິບສັປດາແຫ່ງປີກຳນົດໄວ້ສຳລັບຊົນຊາດແລະນະຄອນອັນສັກສິດຂອງທ່ານ ເພື່ອໃຫ້ສິ້ນສຸດການທໍຣະ
ຍົດ ໃຫ້ບາບຈົບສິ້ນ ແລະໃຫ້ລົບມົນທິນ  ເພື່ອນຳຄວາມຍຸດຕິທັມຕລອດໄປເປັນນິດເຂົ້າມາ ເພື່ອວ່ານິມິດ
ແລະຄຳເວົ້າຂອງຜູ້ປະກາດພຣະທັມຈະໄດ້ສຳເຣັດເປັນຈິງ ແລະເພື່ອພຣະວິຫານອັນສັກສິດຈະໄດ້ເປັນທີ່
ຖວາຍແດ່ພຣະເຈົ້າ

25 ຈົ່ງສັງເກດແລະເຂົ້າໃຈດັ່ງນີ້ ນັບຕັ້ງແຕ່ອອກຄຳສັ່ງໃຫ້ສ້າງນະຄອນເຢຣູຊາເລັມຂຶ້ນໃຫມ່ ໄປຈົນເຖິງພວກຜູ້ນຳ
ທີ່ພຣະເຈົ້າຊົງເລືອກໄດ້ມາຄອບຄອງຈະເປັນເວລາເຈັດອາທິດ ເຂົາຈະສ້າງນະຄອນເຢູຊາເລັມຂຶ້ນໃຫມ່ ຈະມີ
ຖນົນຫົນທາງແລະປ້ອມປ້ອງກັນເມືອງຢ່າງເຂັ້ມແຂງ ແລ້ວເມືອງນີ້ຈະຫມັ້ນຄົງຢູ່ເປັນເວລາຫົກສິບສອງສັປຕະ
ແຕ່ຈະເປັນສມັຍທີ່ມີຄວາມຫຍຸ້ງຍາກ

26 ຫລັງຈາກຫົກສິບສອງສັປຕະແລ້ວ ທ່ານຜູ້ນຶ່ງທີ່ພຣະເຈົ້າຊົງເລືອກໄວ້ຈະຖືກຕັດອອກແລະຈະບໍ່ມີຫຍັງສຳລັບ
ທ່ານ ນະຄອນແລະພຣະວິຫານກໍຈະຖືກກອງທັບຂອງຜູ້ນຳທີ່ຍິ່ງໃຫຍ່ຄົນນຶ່ງບຸກລຸກທຳລາຍ ຄາວສິ້ນສຸດນີ້ຈະ
ມາທຳລາຍເຫມືອນນ້ຳຖ້ວມ ຕອນສຸດທ້າຍຈະມີສົງຄາມແລະການທຳລາຍທີ່ພຣະເຈົ້າຊົງສັ່ງໃຫ້ເກີດຂຶ້ນ

27 ຜູ້ນຳຄົນນັ້ນຈະມີສຳພັນທະໄມຕຣີຢ່າງຫນຽວແຫນ້ນກັບຄົນຈຳນວນຫລາຍເປັນເວລານຶ່ງສັປຕະ ແລະພາຍໃນ
ເຄິ່ງສັປຕະ ທ່ານຈະສັ່ງເລີກບໍ່ໃຫ້ມີເຄື່ອງເຜົາບູຊາແລະເຄື່ອງບູຊາ ເທິງທີ່ສູງສຸດຂອງພຣະວິຫານນັ້ນຈະມີຂອງ
ແປກປລາດອັນຫນ້າຢ້ານຕັ້ງຢູ່ ຈະມີຢູ່ທີ່ນັ້ນຈົນຮອດເວລາທີ່ພຣະເຈົ້າຊົງເຮັດໃຫ້ຜູ້ຕັ້ງມັນໄວ້ໄດ້ພົບກັບຈຸດ
ຈົບ"

## 10 ດານີເອນເຫັນນິມິດໃກ້ແມ່ນ້ຳຕິກຣິດ

Conflict of Nations and Heavenly Powers

1 ໃນປີທີສາມແຫ່ງຣາຊການໄຊຣັສ ກະສັດເປີເຊັຽນັ້ນໄດ້ມີການເປີດເຜີຍຖ້ອຍຄຳໃຫ້ດານີເອນຮູ້ທາງນິມິດ (ດາ
ນີເອນມີຊື່ອື່ນເອີ້ນອີກວ່າ ເບນເຕຊັສຊາ) ຖ້ອຍຄຳນັ້ນເປັນຄວາມຈິງແຕ່ເຂົ້າໃຈຍາກທີ່ສຸດ

2 ໃນເວລານັ້ນຂ້າພະເຈົ້າດານີເອນໄດ້ເປັນທຸກຢູ່ສາມອາທິດ

3 ບໍ່ໄດ້ກິນຂອງແຊບຫລືຊີ້ນໃດໆ ບໍ່ໄດ້ດື່ມເຫລົ້າອະງຸ່ນ ບໍ່ໄດ້ທາວິຜົມຈົນຕລອດສາມອາທິດ

4 ໃນວັນທີຊາວສີ່ຂອງເດືອນທຳອິດ ຂ້າພະເຈົ້າໄດ້ຢືນຢູ່ແຄມຕາຝັ່ງແມ່ນ້ຳໃຫຍ່ຕິກຣິດ

5 ແລະໄດ້ເງີຍຫນ້າຂຶ້ນເຫັນຊາຍຜູ້ນຶ່ງນຸ່ງຫົ່ມເຄື່ອງທີ່ສະງ່າງາມແລະຂັດສາຍແອວຄຳ

6 ຕົນຕົວຂອງທ່ານສ່ອງແສງເປັນປະກາຍເຫມືອນເພັດ ຫນ້າມີແສງເຫລື້ອມເຫມືອນຟ້າແມບເຫລື້ອມ ຕາມີແສງເຫມືອນໄຟ ແຂນຂາເຫລື້ອມເປັນເງົາເຫມືອນທອງສຳຣິດທີ່ຂັດສີແລ້ວ ແລະສຽງຮ້ອງຂອງທ່ານດັງເຫມືອນສຽງຮ້ອງຂອງຝູງຊົນຈຳນວນຫລາຍ

7 ຂ້າພະເຈົ້າຜູ້ດຽວເທົ່ານັ້ນທີ່ໄດ້ເຫັນນິມິດນີ້ ຄົນທັງຫລາຍທີ່ຢູ່ກັບຂ້າພະເຈົ້າບໍ່ໄດ້ເຫັນຫຍັງ ແຕ່ພວກເຂົາກໍຢ້ານແລະແລ່ນໄປລີ້ຢູ່

8 ຂ້າພະເຈົ້າຜູ້ດຽວໄດ້ຢູ່ເບິ່ງນິມິດອັນແປກປລາດນີ້ ຂ້າພະເຈົ້າບໍ່ມີເຫື່ອແຮງເຫລືອຢູ່ເລີຍສີຫນ້າກໍປ່ຽນແປງໄປ

9 ເມື່ອໄດ້ຍິນທ່ານເວົ້າແລ້ວ ຂ້າພະເຈົ້າກໍລົ້ມລົງດິນຫມົດຄວາມຮູ້ສຶກແລະຫມູບຫນ້າຢູ່ທີ່ນັ້ນ

10 ແລ້ວມີມືອັນນຶ່ງມາໂຂມໃຫ້ລຸກຂຶ້ນ ໃຫ້ຫົວເຂົ່າແລະມືຄ້ຳດິນໄວ້ ແຕ່ຂ້າພະເຈົ້າກໍຍັງຕົວສັ່ນຢູ່

11 ຄົນນັ້ນໄດ້ເວົ້າກັບຂ້າພະເຈົ້າວ່າ, “ດານີເອນເອີຍ, ພຣະເຈົ້າຊົງຮັກເຈົ້າ ຈົ່ງຢືນຂຶ້ນແລະຕັ້ງໃຈຟັງສິ່ງທີ່ເຮົາຈະເວົ້າ ພຣະເຈົ້າຊົງໃຊ້ໃຫ້ເຮົາມາຫາເຈົ້າ” ເມື່ອທ່ານເວົ້າດັ່ງນີ້ແລ້ວ ຂ້າພະເຈົ້າກໍຢືນຕົວສັ່ນຢູ່

12 ຕໍ່ມາທ່ານໄດ້ເວົ້າວ່າ, “ດານີເອນເອີຍ, ຢ່າຢ້ານເດີ ມື້ທຳອິດທີ່ເຈົ້າຕັດສິນໃຈຖ່ອມຕົວລົງອ້ອນວອນເພື່ອໃຫ້ເຂົ້າໃຈນັ້ນ ພຣະເຈົ້າຊົງໄດ້ຮັບຟັງຄຳອ້ອນວອນຂອງເຈົ້າແລ້ວ ເຮົາໄດ້ມາຍ້ອນຄຳອ້ອນວອນຂອງເຈົ້ານັ້ນ

13 ເທວະດາຕົນປົກປັກຮັກສາຣາຊອານາຈັກເປີເຊັຽໄດ້ຂັດຂວາງເຮົາເປັນເວລາຊາວເອັດມື້ ແລ້ວມີຄາເອນເທວະດາຊັ້ນຫົວຫນ້າຕົນນຶ່ງໄດ້ມາຊ່ອຍເຮົາ ເພາະເຮົາຜູ້ດຽວທີ່ຍັງເຫລືອຢູ່ໃນຣາຊອານາຈັກເປີເຊັຽ

14 ເຮົາໄດ້ມາເຮັດໃຫ້ເຈົ້າເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນກັບປະຊາຊົນຂອງເຈົ້າໃນອະນາຄົດ ອັນນີ້ແມ່ນນິມິດໃຫຍ່ກ່ຽວກັບອະນາຄົດ”

15 ເມື່ອທ່ານກ່າວດັ່ງນີ້ແລ້ວ ຂ້າພະເຈົ້າກໍກົ້ມຫນ້າບໍ່ເວົ້າຈາຫຍັງ

16 ແລ້ວເທວະດາຕົນນຶ່ງຊຶ່ງມີຮູບຮ່າງເຫມືອນມະນຸດ ເດ່ມືອອກມາບາຍຮີມສົບຂອງຂ້າພະເຈົ້າ ຂ້າພະເຈົ້າຈຶ່ງເວົ້າຕໍ່ທ່ານຊຶ່ງຢືນຢູ່ຂ້າງຫນ້າວ່າ, “ນາຍເອີຍ, ນິມິດນີ້ເຮັດໃຫ້ຂ້າພະເຈົ້າຫມົດແຮງຫລາຍຈົນຕົນຕົວຂ້າພະເຈົ້າສັ່ນ

17 ຂ້າພະເຈົ້າເປັນເຫມືອນຂ້ອຍທາດທີ່ຢືນຢູ່ຕໍ່ຫນ້ານາຍ ຈະເວົ້າກັບທ່ານໄດ້ຢ່າງໃດ ເພາະວ່າບໍ່ມີແຮງຫລືລົມຫາຍໃຈເຫລືອຢູ່ໃນຕົວເລີຍ”

18 ແລ້ວທ່ານໄດ້ຈັບບາຍຂ້າພະເຈົ້າອີກເທື່ອນຶ່ງ ຂ້າພະເຈົ້າຈຶ່ງຮູ້ສຶກມີແຮງຂຶ້ນ

19 ທ່ານໄດ້ເວົ້າວ່າ, “ພຣະເຈົ້າຊົງຮັກແພງເຈົ້າ ດັ່ງນັ້ນຢ່າອຸກໃຈຫລືຢ້ານເດີ ຈົ່ງກ້າຫານສາ” ເມື່ອທ່ານກ່າວດັ່ງນີ້ແລ້ວ ຂ້າພະເຈົ້າກໍຮູ້ສຶກມີແຮງແລະເວົ້າວ່າ, “ນາຍເອີຍ, ຈົ່ງບອກຂ້າພະເຈົ້າແດ່ສິ່ງທີ່ນາຍຈະເວົ້ານັ້ນ ທ່ານໄດ້ເຮັດໃຫ້ຂ້າພະເຈົ້າມີແຮງຂຶ້ນ”

20 ແລ້ວທ່ານເວົ້າວ່າ, “ທ່ານຮູ້ບໍ່ວ່າ ເປັນຫຍັງເຮົາຈຶ່ງມາຫາທ່ານ? ບັດນີ້ ເຮົາຈະຕ້ອງຄືນໄປຕໍ່ສູ້ກັບເທວະດາຕົນທີ່ປົກປັກຮັກສາປະເທດເປີເຊັຽ ຫລັງຈາກນັ້ນ ເທວະດາຕົນປົກປັກຮັກສາປະເທດກຣີກຈະມາປາກົດ

21 ເຮົາມາມື້ນີ້ເພື່ອເປີດເຜີຍສິ່ງທີ່ຂຽນໄວ້ໃນຫນັງສືສັຈະທັມ ບໍ່ມີໃຜຊ່ອຍເຫລືອເຮົາຕໍ່ສູ້ເຈົ້າເຫລົ່ານີ້ເລີຍ ນອກຈາກມີຄາເອນເທວະດາຕົນທີ່ປົກປັກຮັກສາປະເທດອິສຣາເອນ

## 11

Chapter 11

1 ສ່ວນຕົວຂ້າພະເຈົ້ານັ້ນ ໃນປີຕົ້ນແຫ່ງຣັຊການດາຣິອຸສ ຄົນມີເດັຽ ຂ້າພະເຈົ້າເປັນຕົວຕັ້ງຕົວຕີທີ່ໃຫ້ກຳລັງກະສັດ

**ຣາຊອານາຈັກເອຢິບແລະຊີເຣັຽ**

2 “ແລະບັດນີ້ ຂ້າພະເຈົ້າຈະສຳແດງຄວາມຈິງໃຫ້ແກ່ທ່ານ ເບິ່ງແມ, ຈະມີກະສັດອີກສາມອົງປົກຄອງປະເທດເປີ
ເຊັ່ງ ອົງທີສີ່ຈະເປັນອົງສຸດທ້າຍ ກະສັດອົງນີ້ຈະມີຊັບສົມບັດຫລາຍກວ່າອົງອື່ນທັງຫມົດ ໃນເວລາພຣະອົງຊົງ
ເຂັ້ມແຂງ ແລະມີຊັບສົມບັດຫລາຍ ພຣະອົງຈະທຳສົງຄາມກັບຣາຊອານາຈັກກຣີກ

3 ແລ້ວຈະມີກະສັດທີ່ກ້າຫານອົງນຶ່ງຄອບຄອງທົ່ວຣາຊອານາຈັກໃຫຍ່ ແລະຈະເຮັດທຸກສິ່ງຕາມພຣະປະສົງ

4 ແຕ່ໃນເວລາທີ່ພຣະອົງຊົງມີອຳນາດຍິ່ງໃຫຍ່ນັ້ນ ອານາຈັກຂອງພຣະອົງຈະແຕກແຍກ ແລະຖືກແບ່ງອອກເປັນ
ສີ່ສ່ວນ   ຣາຊວົງຂອງພຣະອົງຈະບໍ່ໄດ້ປົກຄອງ ຄົນອື່ນຈະເຂົ້າປົກຄອງແທນ ແຕ່ພວກເຂົາຈະບໍ່ມີອຳນາດ
ເຫມືອນພຣະອົງ

5 ກະສັດເອຢິບກໍເປັນຜູ້ນຶ່ງໃນພວກນັ້ນຊຶ່ງມີອຳນາດ ແຕ່ຈະມີນາຍທະຫານອີກຜູ້ນຶ່ງຂອງພຣະອົງເຂັ້ມແຂງກວ່າ
ແລະຈະປົກຄອງຣາຊອານາຈັກທີ່ຍິ່ງໃຫຍ່ກວ່າ

6 ຫລັງຈາກນັ້ນຫລາຍປີ ກະສັດເອຢິບຈະໃຫ້ພຣະຣາຊທິດາຂອງພຣະອົງສົມຣົດກັບກະສັດຊີເຣັຽ ເພື່ອຈະໄດ້
ເປັນພັນທະມິດກັນ ແຕ່ພັນທະມິດນີ້ຈະມີຢູ່ບໍ່ເຖິງ ເພາະວ່າພຣະນາງກັບພວກຄົນໃຊ້ທີ່ໄປກັບພຣະນາງພ້ອມ
ກັບໂອຣົດແລະພຣະຣາຊສາມີຂອງພຣະນາງຈະຖືກຂ້າທັງຫມົດ

7 ໃນບໍ່ດົນເຊື້ອພຣະວົງອົງນຶ່ງຂອງພຣະນາງກໍຈະໂຈມຕີກອງທັບຂອງກະສັດຊີເຣັຽ ຈະເຂົ້າໄປໂຈມຕີປ້ອມແລະ
ຊະນະພວກເຂົາ

8 ແລ້ວຈະຂົນເອົາຮູບໂຄຣົບຂອງພວກເຂົາ ພ້ອມດ້ວຍສິ່ງຂອງອັນມີຄ່າທີ່ທຳດ້ວຍເງິນຄຳທັງຫມົດໄປຍັງປະ
ເທດເອຢິບ

9 ຫລັງຈາກນັ້ນຈະມີຄວາມສງົບສຸກຢູ່ຫລາຍປີ ແລ້ວກະສັດຊີເຣັຽຈະຍົກທັບເຂົ້າໂຈມຕີປະເທດເອຢິບ ແຕ່ຈະ
ຖືກກອງທັບເອຢິບຕີໂຕ້ພ່າຍໄປ

10 ພຣະຣາຊໂອຣົດທັງຫລາຍຂອງກະສັດຊີເຣັຽຈະຕຽມຮົບ ແລະຮວບຮວມກຳລັງຮົບໄວ້ເປັນຈຳນວນຫລາຍ ພ
ຣະໂອຣົດອົງນຶ່ງຈະມີໄຊຊະນະຢ່າງງ່າຍດາຍ ທ່ານຈະຜ່ານເຂົ້າໄປໂຈມຕີເອົາປ້ອມຂອງພຣະອົງຄືນມາ

11 ກະສັດເອຢິບຈະເຂົ້າສູ່ສົງຄາມຕໍ່ຕ້ານກະສັດຊີເຣັຽດ້ວຍຄວາມຄຽດແຄ້ນແລະຈະຈັບເອົາພົນຮົບອຂງພຣະອົງ
ຈຳນວນຫລວງຫລາຍ

12  ພຣະອົງຈະພາກພູມພຣະທັຍໃນໄຊຊະນະແລະທີ່ໄດ້ຂ້າທະຫານຈຳນວນຫລວງຫລາຍ ແຕ່ພຣະອົງຈະບໍ່ມີໄຊ
ຊະນະຕໍ່ໄປເລື້ອຍໆ

13 ຝ່າຍກະສັດຊີເຣັຽ ຈະກັບຄືນໄປຮວບຮວມພົນຮົບໃຫ້ໄດ້ຫລາຍກວ່າແຕ່ກ່ອນ ເມື່ອໄດ້ເວລາອັນເຫມາະສົມ
ແລ້ວ ພຣະອົງກັບກອງທັບໃຫຍ່ທີ່ມີອາວຸດຢ່າງດີຈຶ່ງຈະກັບຄືນມາຕໍ່ສູ້

14 ເມື່ອນັ້ນ ຈະມີຫລາຍຄົນລຸກຂຶ້ນຕໍ່ສູ້ກະສັດເອຢິບ ດານີເອນເອີຍ ຄົນທີ່ແຂງແຮງບາງຄົນຈາກຊົນຊາດຂອງເຈົ້າ
ຈະເປັນກະບົດຍ້ອນນິມິດທີ່ພວກເຂົາໄດ້ເຫັນ ແຕ່ພວກເຂົາຈະຖືກປາບຜ່າຍແພ້ກະສັດຊີເຣັຽຈະລ້ອມເມືອງທີ່
ມີກຳແພງອ້ອມຮອບ

15 ແລ້ວຍຶດເອົາເມືອງນັ້ນໄດ້ ພວກທະຫານຂອງເອຢິບຈະຕໍ່ສູ້ບໍ່ໄຫວ ແມ່ນແຕ່ທະຫານທີ່ເກັ່ງກ້າທີ່ສຸດກໍສູ້ບໍ່ໄດ້

16 ພວກຊີເຣັຽຈະທຳທຸກຢ່າງຕາມຄວາມພໍໃຈໂດຍບໍ່ມີການຕໍ່ຕ້ານ ກະສັດຊີເຣັຽຈະຢູ່ໃນແຜ່ນດິນທີ່ຊົງສັນຍາໄວ້
ແລະຈະມີອຳນາດຢ່າງສົມບູນຢູ່ໃນແຜ່ນດິນນັ້ນ

17 ກະສັດຊີເຣັຽຄິດຈະໃຊ້ທະຫານທັງຫມົດໄປຕໍ່ສູ້ກະສັດເອຢິບ ແຕ່ຊົງປ່ຽນຄວາມຄິດນັ້ນເສັຽ ແລ້ວພຣະອົງຈະ
ທຳສັນຍາມອບພຣະຣາຊທິດາໃຫ້ສົມຣົດກັບກະສັດເອຢິບ ເພື່ອໃຫ້ພຣະນາງພຍາຍາມທຳລາຍຝ່າຍສັດຕຣູ
ແຕ່ພຣະອົງຈະທຳບໍ່ສຳເຣັດ

18 ຫລັງຈາກນັ້ນ ພຣະອົງຈະໂຈມຕີຊົນຊາດຕ່າງໆຕາມແຄມທະເລ ເພື່ອຈະຍຶດເອົາໃຫ້ໄດ້ເປັນຈຳນວນຫລາຍ ແຕ່ຈະມີຜູ້ນຳຊາວຕ່າງປະເທດຄົນນຶ່ງປາບພຣະອົງລົງ ແລະກຳຈັກຄວາມທະເຍີທະຍານຂອງພຣະອົງໃຫ້ໝົດໄປ

19 ກະສັດຊີເຣັຽຈະສະເດັດຄືນໄປຍັງປ້ອມໃນປະເທດຂອງພຣະອົງເອງ ແຕ່ພຣະອົງກໍຈະຖືກປາບໃຫ້ຫມົດສິ້ນລົງ

20 ຕໍ່ຈາກພຣະອົງມາຈະມີກະສັດອີກອົງນຶ່ງ ກະສັດອົງນີ້ຈະສົ່ງເຈົ້າພະນັກງານສ່ວຍສາອາກອນໄປຫາເກັບເອົາເງິນ ເພື່ອມາເພີ້ມລາຍໄດ້ໃຫ້ຣາຊອານາຈັກຂອງພຣະອົງ ໃນບໍ່ເຫິງກະສັດອົງນີ້ກໍຈະຖືກເຂົາຂ້າຖິ້ມ

**ກະສັດໃຈໂຫດ**

21 ກະສັດຊີເຣັຽຕໍ່ໄປຈະເປັນຄົນໃຈໂຫດຮ້າຍ ຊຶ່ງບໍ່ມີສິດຈະໄດ້ເປັນກະສັດ ແຕ່ພຣະອົງກໍຈະໄດ້ເປັນຢ່າງບໍ່ມີໃຜຄາດຄິດ ແລະຈະຍຶດເອົາອຳນາດດ້ວຍກົນອຸບາຍ

22 ເຫລົ່າທະຫານທີ່ຕໍ່ຕ້ານພຣະອົງ ແລະແມ່ນແຕ່ມະຫາປະໂຣຫິດຂອງພຣະເຈົ້າກໍຈະຖືກກວາດລ້າງແລະກຳຈັດໃຫ້ຫມົດໄປ

23 ພຣະອົງຈະລໍ້ລວງເອົາຊົນຊາດອື່ນມາເປັນພັນທະມິດ ເຖິງແມ່ນພຣະອົງໄດ້ປົກຄອງພຽງຊົນຊາດນ້ອຍໆເທົ່ານັ້ນ

24 ແຕ່ພຣະອົງກໍຈະເຂັ້ມແຂງ ຈະບຸກຮຸກເຂດແຂວງທີ່ອຸດົມສົມບູນແລະມີຄວາມສົງບສຸກ ຈະທຳສິ່ງທີ່ຣາຊວົງບໍ່ເຄີຍທຳມາກ່ອນ ແລ້ວພຣະອົງຈະແບ່ງຊັບສິ່ງຂອງທີ່ຍຶດມາໄດ້ໃນສົງຄາມໃຫ້ພັກພວກຂອງພຣະອົງ ແລະຈະວາງແຜນໂຈມຕີປ້ອມ ແຕ່ພຣະອົງຈະທຳໄປບໍ່ໄດ້ເຫິງນານ

25 ພຣະອົງຈະຍົກກອງທະຫານຈຳນວນຫລາຍໄປໂຈມຕີກະສັດເອຢິບຢ່າງກ້າຫານ ຝ່າຍກະສັດເອຢິບຈະຕຽມຕົວສູ້ກັບກອງທັບໃຫຍ່ທີ່ເຂັ້ມແຂງທີ່ສຸດ ແຕ່ພຣະອົງຈະທຳບໍ່ສຳເຣັດ ຍ້ອນວ່າຖືກຫລອກດ້ວຍກົນອຸບາຍ

26 ຄນະຜູ້ປຶກສາຄົນສນິດຂອງພຣະອົງຈະປອງຮ້າຍພຣະອົງ ພວກທະຫານຫລາຍຄົນຂອງພຣະອົງຈະຖືກຂ້າກອງທັບກໍຈະຖືກກຳຈັດໃຫ້ຫມົດໄປ

27 ແລ້ວກະສັດທັງສອງອົງນີ້ຈະນັ່ງຮ່ວມໂຕະດຽວກັນ ແຕ່ພຶດຕິການຂອງພວກເຂົາຈະເປັນໄປໃນທາງຊົ່ວຮ້າຍຈະເວົ້າຕົວະຊຶ່ງກັນແລະກັນ ສະນັ້ນຕ່າງຝ່າຍຈະບໍ່ໄດ້ອັນໃດຕາມທີ່ຫວັງໄວ້ ເພາະວ່າເວລາອັນເຫມາະສົມຍັງບໍ່ມາເຖິງ

28 ກະສັດຊີເຣັຽຈະກັບຄືນບ້ານເມືອງພ້ອມດ້ວຍສິ່ງຂອງທີ່ຍຶດໄດ້ທັງຫມົດ ຈະຊົງວາງແຜນທຳລາຍສາສນາແຫ່ງໄພ່ພົນຂອງພຣະເຈົ້າ ພຣະອົງຈະທຳຕາມຊອບພຣະທັຍແລ້ວກັບຄືນໄປບ້ານເມືອງຂອງຕົນເອງ

29 ໃນພາຍຫລັງ ພຣະອົງຈະບຸກຮຸກປະເທດເອຢິບອີກ ແຕ່ທຸກສິ່ງຈະບໍ່ເປັນໄປເຫມືອນແຕ່ກ່ອນ

30 ເພາະວ່າພວກໂຣມຈະຕາມມາທາງເຮືອເພື່ອຂັດຂວາງພຣະອົງ ພຣະອົງຈະຢ້ານກົວ ແລະພຣະອົງຈະກັບໄປດ້ວຍຄວາມຄຽດແຄ້ນ ຈະວາງແຜນທຳລາຍສາສນາແຫ່ງໄພ່ພົນຂອງພຣະເຈົ້າ ແລະຈະທຳຕາມຄຳແນະນຳຂອງພວກທີ່ປະຖິ້ມສາສນາແລ້ວນັ້ນ

31 ກອງທັບຂອງເຂົາຈະມາທຳສະຖານນະມັສການ ຄືປ້ອມຍາມໃຫ້ເປັນມົນທິນ ແລະຈະໃຫ້ເລີກເຄື່ອງເຜົາບູຊາຕລອດໄປນັ້ນເສັຽ ແລະເຂົາທັງຫລາຍຈະຕັ້ງສິ່ງທີ່ຫນ້າກຽດຫນໍ້າຊັງຊຶ່ງກະທຳໃຫ້ເກີດຄວາມວິບັດຂຶ້ນ

32 ຝ່າຍກະສັດຈະໃຊ້ກົນອຸບາຍເອົາຊະນະຄົນອື່ນໆທີ່ປະຖິ້ມສາສນາຂອງຕົນແລ້ວ ແຕ່ພວກທີ່ບົວລະບັດພຣະເຈົ້າຈະເຂັ້ມແຂງແລະສຳເຣັດຜົນ

33 ຄົນພວກນີ້ເປັນຜູ້ທີ່ສລາດໃນຫມູ່ປະຊາຊົນ ພວກເຂົາຈະສິດສອນວິຊາຄວາມຮູ້ໃຫ້ແກ່ຄົນອື່ນຈຳນວນຫລວງຫລາຍ ແຕ່ໃນຊົ່ວເວລານຶ່ງ ພວກເຂົາບາງຄົນຈະຕາຍດ້ວຍດາບແລະໄຟ ບາງຄົນຈະຖືກປຸ້ນໄປ ແລະຖືກຈັບໄປເປັນຊະເລີຍ

34 ໃນຂນະທີ່ກຳລັງຖືກເຂັ່ນຂ້າຢູ່ນັ້ນ ພວກເຂົາຈະໄດ້ຮັບຄວາມຊ່ອຍເຫລືອບາງເລັກນ້ອຍ ແຕ່ຈະມີຫລາຍຄົນມາ
ຊ່ອຍເຫລືອພວກເຂົາ ຍ້ອນເຫັນແກ່ປໂຍດສ່ວນຕົວ
35 ຄົນຜູ້ສລາດບາງຄົນຈະຖືກຂ້າ ຈຸດປະສົງຂອງເຣື່ອງນີ້ກໍເພື່ອຢາກໃຫ້ປະຊາຊົນມີຈິດໃຈສະອາດບໍຣິສຸດໄປຈົນ
ເຖິງເວລາສຸດທ້າຍທີ່ພຣະເຈົ້າຊົງກຳນົດໄວ້
36 ກະສັດຊີເຣັຽຈະທຳຕາມຊອບພຣະທັຍ ຈະໂອ້ອວດວ່າຕົນຍິ່ງໃຫຍ່ກວ່າພຣະໃດໆ ແລະອວດວ່າຕົນສູງ
ສຸດກວ່າພຣະເຈົ້າອົງສູງສຸດ ພຣະອົງຈະທຳດັ່ງນີ້ໄປຈົນເຖິງເວລາພຣະເຈົ້າຊົງລົງໂທດພຣະອົງ ພຣະເຈົ້າຈະຊົງ
ຕັດສິນພຣະທັຍກະທຳສິ່ງທັງຫລາຍ
37 ກະສັດຊີເຣັຽຈະບໍ່ເອົາໃຈໃສ່ກັບພຣະທີ່ພວກບັນພະບຸຣຸດຂອງຕົນເຄີຍບົວລະບັດມາ ແລະພຣະທີ່ພວກຜູ້ຍິງ
ນັບຖື ແທ້ຈິງແລ້ວພຣະອົງບໍ່ໄດ້ເອົາໃຈໃສ່ກັບພຣະໃດໆເລີຍ ເພາະພຣະອົງຄິດວ່າຕົນຍິ່ງໃຫຍ່ກວ່າພຣະເຫລົ່າ
ນັ້ນ
38 ພຣະອົງຈະໃຫ້ກຽດພຣະທີ່ຄຸ້ມຄອງປ້ອງກັນປ້ອມແທນພຣະເຫລົ່ານີ້ ຈະຖວາຍເງິນ ຄຳ ຖວາຍເພັດ ແລະຂອງ
ມີຄ່າອື່ນໆແກ່ພຣະທີ່ຣາຊວົງຂອງທ່ານບໍ່ເຄີຍຂາບໄຫວ້ມາກ່ອນ
39 ຈະໃຊ້ຄົນທີ່ຂາບໄຫວ້ພຣະຕ່າງປະເທດປ້ອງກັນປ້ອມຂອງພຣະອົງ ຈະໃຫ້ກຽດຢ່າງສູງແກ່ພວກທີ່ຍອມຮັບ
ເອົາພຣະອົງເປັນຜູ້ປົກຄອງ ຈະມອບຫມາຍຕຳແຫນ່ງອັນສູງທາງຣາຊການໃຫ້ ແລະມອບທີ່ດິນໃຫ້ເປັນສິ່ງ
ຕອບແທນ

**ເວລາສິ້ນສຸດ**

The Time of the End

40 ເມື່ອເວລາກຳນົດຂອງກະສັດຊີເຣັຽໃຫ້ຈະຫມົດລົງ ກະສັດເອຢິບຈະໂຈມຕີພຣະອົງ ແຕ່ພຣະອົງກໍຈະຕອບໂຕ້
ດ້ວຍກຳລັງທັງຫມົດ ໂດຍຈະໃຊ້ຣົດຮົບ ພົນມ້າ ແລະເຮືອຈຳນວນຫລາຍ ຈະບຸກໂຈມຕີປະເທດເອຢິບ
ເຫມືອນນ້ຳໄຫລຖ້ວມ
41 ຈະໂຈມຕີແຜ່ນດິນທີ່ຊົງສັນຍາໄວ້ດ້ວຍ ຈະຂ້າຄົນຕາຍເປັນຫມື່ນໆ ສ່ວນປະເທດເອໂດມ ປະເທດໂມອາບ
ແລະຄົນອັມໂມນທີ່ຍັງເຫລືອຈະຢູ່ລອດພົ້ນໄດ້
42 ພຣະອົງຈະບຸກໂຈມຕີຫລາຍປະເທດ ແມ່ນແຕ່ປະເທດເອຢິບກໍຈະຖືກໂຈມຕີ
43 ຈະຂົນເອົາຂອງມີຄ່າທີ່ເປັນເງິນເປັນຄຳ ແລະຊັບສົມບັດມີຄ່າອື່ນໆອຂງປະເທດເອຢິບໄປ ຈະມີໄຊຊະນະປະ
ເທດລີເບັຽ ແລະເອທີໂອເປັຽ
44 ແລ້ວຂ່າວທີ່ມາຈາກທິດຕາເວັນອອກ ແລະເຫນືອຈະທຳໃຫ້ພຣະອົງຕົກໃຈ ພຣະອົງຈະສູ້ຮົບຢ່າງໂຫດຮ້າຍ
ຈະຂ້າຄົນເປັນຈຳນວນຫລາຍ
45 ຈະກາງເຕັນຫລວງຂນາດໃຫຍ່ໄວ້ລະຫວ່າງທະເລກັບພູບ່ອນຕັ້ງພຣະວິຫານ ແຕ່ຈະສິ້ນຊີວິດໂດຍບໍ່ມີໃຜທີ່ນັ້ນ
ຊ່ອຍພຣະອົງໄດ້

## 12 ເວລາສິ້ນສຸດ

The Resurrection of the Dead

1 ໃນເວລານັ້ນ ມີຄາເອນເທວະດາຕົນຍິ່ງໃຫຍ່ ຜູ້ຮັກສາປະຊາຊົນຂອງເຈົ້າຈະມາປາກົດ ແລ້ວຈະມີການທຸກ
ຍາກລຳບາກຢ່າງທີ່ບໍ່ເຄີຍມີມາ ຕັ້ງແຕ່ຊາດທັງຫລາຍໄດ້ເກີດຂຶ້ນ ເມື່ອເຖິງເວລານັ້ນ ປະຊາຊົນທັງປວງຂອງ
ເຈົ້າ ຊຶ່ງມີຊື່ຂຽນໄວ້ໃນຫນັງສືຂອງພຣະເຈົ້າຈະໄດ້ລອດພົ້ນ
2 ຫລາຍຄົນໃນພວກເຫລົ່ານີ້ທີ່ໄດ້ຕາຍໄປແລ້ວຈະມີຊີວິດຄືນມາອີກ ລາງຄົນຈະມີຊີວິດຕລອດໄປບາງຄົນຈະ
ໄດ້ຮັບຄວາມອັບອາຍຂາຍຫນ້າຕລອດໄປ

3 ຄົນທັງຫລາຍທີ່ສລາດຈະຮຸ່ງເຮືອງ ເຫມືອນດວງດາວສວ່າງເທິງທ້ອງຟ້າ ແລະຜູ້ທີ່ສັ່ງສອນຄົນທັງຫລາຍໃຫ້
ເປັນຜູ້ຊອບທັມ ຈະຮຸ່ງເຮືອງເຫມືອນດວງດາວຕລອດໄປ
4 ດານີເອນເອີຍ ບັດນີ້ເຈົ້າຈົ່ງຮໍາຫນັງສືມ້ວນນັ້ນໄວ້ ແລະຕີຕຣາປະທັບໄວ້ຈົນເຖິງເວລາສຸດທ້າຍ ໃນເວລານັ້ນ
ຄົນຈໍານວນຫລາຍຈະແລ່ນເຕັ້ນຊອກຫາຄວາມເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນ”
5 ຂ້າພະເຈົ້າດານີເອນ ໄດ້ເຫັນຄົນອື່ນອີກສອງຄົນຢືນຢູ່ ແຕ່ລະຄົນຢືນຢູ່ແຄມແມ່ນໍ້າຄົນລະເບື້ອງ
6 ຄົນນຶ່ງໄດ້ເວົ້າກັບຄົນທີ່ນຸ່ງຫົ່ມເຄື່ອງອັນສະງ່າງາມ ຊຶ່ງຢືນຢູ່ເຫນືອນໍ້າຂຶ້ນໄປວ່າ, “ຍັງອີກເທິງປານໃດສິ່ງອັສ
ຈັນເຫລົ່ານີ້ຈະຫມົດສິ້ນລົງ”
7 ຊາຍຜູ້ນຸ່ງເຄື່ອງອັນສະງ່າງາມ ໄດ້ຍົກມືຂວາແລະມືຊ້າຍທັງສອງຂຶ້ນເທິງຟ້າສວັນ ແລະໄດ້ສັນຍາຢ່າງຫນັກ
ແຫນ້ນ ໃນ  ພຣະນາມຂອງພຣະເຈົ້າອົງຊົງພຣະຊົນຢູ່ເປັນນິດ ຂ້າພະເຈົ້າໄດ້ຍິນທ່ານເວົ້າວ່າ, “ຍັງອີກວາຣະ
ນຶ່ງ ສອງວາຣະ ແລະເຄິ່ງວາຣະ ແລະເມື່ອການປະຫັດປະຫານໄພ່ພົນຂອງພຣະເຈົ້າສິ້ນສຸດລົງແລ້ວ ສິ່ງທັງ
ປວງເຫລົ່ານີ້ຈຶ່ງຈະສິ້ນສຸດລົງ”
8 ຂ້າພະເຈົ້າໄດ້ຍິນສິ່ງທີ່ທ່ານເວົ້າ ແຕ່ຂ້າພະເຈົ້າບໍ່ເຂົ້າໃຈ ດັ່ງນັ້ນຂ້າພະເຈົ້າຈຶ່ງຖາມວ່າ, “ນາຍເອີຍ ສິ່ງນີ້ຈະສິ້ນ
ສຸດລົງໄດ້ຢ່າງໃດ”
9 ທ່ານໄດ້ຕອບວ່າ, “ດານີເອນເອີຍ ເຈົ້າຈົ່ງໄປເສັຽດຽວນີ້ ເພາະຄໍາເວົ້າຈະຖືກປົກປິດໄວ້ເປັນຄວາມລັບ ຈົນເທົ່າ
ຮອດເວລາສິ້ນສຸດນັ້ນໄດ້ມາເຖິງ
10 ປະຊາຊົນຈໍານວນຫລາຍຈະຂາວສະອາດບໍຣິສຸດ ຄົນທັງຫລາຍຈະບໍ່ເຂົ້າໃຈ ພວກເຂົາຈະຍັງເປັນຄົນຊົ່ວຢູ່ຕໍ່
ໄປ ແຕ່ຄົນທັງຫລາຍທີ່ສລາດຈະເຂົ້າໃຈ
11 ຕັ້ງແຕ່ເວລາທີ່ພວກເຂົາເລີກເຄື່ອງເຜົາບູຊາປະຈໍາວັນ ແລະຕັ້ງແຕ່ສິ່ງແປກປລາດອັນຫນ້າຢ້ານໄວ້ ໄປຈົນເຖິງ
ເວລາສິ້ນສຸດຈະເປັນເວລານຶ່ງພັນສອງຮ້ອຍເກົ້າສິບມື້
12 ແລ້ວຄວາມສຸກຈະມີກັບຄົນທັງຫລາຍທີ່ຍັງຕັ້ງຫມັ້ນຢູ່ໃນຄວາມເຊື່ອເປັນເວລານຶ່ງພັນສາມຮ້ອຍສາມສິບຫ້າມື້
13 ດານີເອນເອີຍ ເຈົ້າຈົ່ງເຊື່ອໄປຈົນເທົ່າມື້ຕາຍ ແລ້ວເຈົ້າຈະໄດ້ເປັນຜູ້ລຸກຂຶ້ນມາຮັບເອົາຮາງວັນຂອງເຈົ້າ ໃນເວ
ລາສິ້ນສຸດໂລກ”